ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ສິງຫາ 2026
ປີທີ 15
ສະບັບທີ 1076

## ຮອງປະທານສະພາແຫ່ງຊາດ ເຮັດວຽກຢູ່ 3 ແຂວງ



(ສພຊ) - ພິທີປະກາດກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ, ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ແລະເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ໄດ້ຈັດຂຶ້ນທີ່ສະໂມສອນໃຫຍ່ຂອງແຂວງ ໃນວັນທີ 24, 27 ແລະ 30 ກໍລະກົດ 2026 ຕາມລຳດັບ ໂດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ; ມີກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ບັນດາທ່ານຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງປະຈຳເມືອງອ້ອມຂ້າງ, ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຜູ້ຕາງໜ້າຂອງພະແນກການ ແລະ ອົງການອ້ອມຂ້າງແຂວງ, ຄະນະຫ້ອງວ່າການແລະພະນັກງານເສນາທິການຂອງສະພາປະຊາຊົນ 3 ແຂວງດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ບັນດາທ່ານເລຂາພັກແຂວງ ໄດ້ລາຍງານກ່ຽວກັບສະພາບໂດຍຫຍໍ້ໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ໃນໄລຍະ 6 ເດືອນຕົ້ນປີແລະທິດທາງແຜນການ 6 ເດືອນທ້າຍປີ 2026. ຫຼັງຈາກນັ້ນ, ທ່ານຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ອ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 190/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ພູທະນູເຜັດ ໄຊສົມບັດ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ແລະ ທ່ານ ສີທົນ ແສງພະ

ອ່ານຕໍ່ໜ້າ 4




ພັກເຮົາ ຮັບໃຊ້ປະຊາຊົນ, ຮັບໃຊ້ປະເທດຊາດຢ່າງສຸດໃຈສຸດກຳລັງ, ພັກບໍ່ມີຜົນປະໂຫຍດອັນໃດອື່ນນອກຈາກຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຂອງປະຊາຊົນຜູ້ອອກແຮງງານບັນດາເຜົ່າ ແລະ ຂອງຊາດ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 156)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມໂຕະມົນບັນຫາອາກາດ ແລະ ນ້ຳ ແລະ ກອງປະຊຸມ AAWC



(ສພຊ) - ກອງປະຊຸມໂຕະມົນກ່ຽວກັບບັນຫາອາກາດ ແລະ ນ້ຳ ຄັ້ງທີ 3 ແລະ ກອງປະຊຸມສະພາທີ່ປຶກສາກ່ຽວກັບບັນຫານ້ຳຂອງລັດຖະສະພາອາຊີ (AAWC) ຄັ້ງທີ 9 ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 28 ກໍລະກົດ 2026 ທີ່ໂຮງແຮມຣໍລິເດອິນ, ນະຄອນຫຼວງວຽງຈັນ, ສປປລາວ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ວິ

ອ່ານຕໍ່ໜ້າ 8




## ປະກາດແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 8




ອ່ານຕໍ່ໜ້າ 4

## ລະນຶກວັນເກີດຟີເດນກັສໂຕຣຜູ້ນຳທາງປະຫວັດສາດທີ່ດີເດັ່ນ ແລະ ກ້ານກ່ນຂອງການປະຕິວັດກູບາ



(ສພຊ) - ຕອນບ່າຍວັນທີ 3 ສິງຫາ 2026 ທີ່ສະພາແຫ່ງຊາດ, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ມີຄຳເຫັນໃນໂອກາດລະນຶກວັນເກີດຂອງສະຫາຍຟີແດນກັສໂຕຣ (Fidel Castro) ຜູ້ນຳ

ອ່ານຕໍ່ໜ້າ 3

## ປະທານກຳມາທິການການຕ່າງປະເທດ ເຄື່ອນໄຫວວຽກງານຢູ່ 3 ເມືອງແຂວງສະຫວັນນະເຂດ



ອ່ານຕໍ່ໜ້າ 4

## ກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 17



ອ່ານຕໍ່ໜ້າ 8

**ຊົມເຊີຍ ວັນສ້າງຕັ້ງສະພາປະຊາຊົນທ້ອງຖິ່ນ ຫຼື ສະພາປະຊາຊົນຂັ້ນແຂວງ ຄົບຮອບ 48 ປີ ຢ່າງສຸດໃຈ!**

## ສພຂ ຜົ້ງສາລີ ພົບປະອົງການກວດສອບປະຈຳພາກເໜືອ



(ສພຂ) - ວັນທີ 8 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ (ສພຂ) ຜົ້ງສາລີ, ທ່ານ ສຸວັນຟູ ລາວລີ ຮອງປະທານຄະນະກຳມະການເສດຖະກິດ ແລະ ການເງິນ ໄດ້ພົບປະກັບທ່ານ ອິນທາ ລືນາມມະຈັກ ປະທານອົງການກວດສອບແຫ່ງລັດ ປະຈຳພາກເໜືອ 2 ໃນໂອກາດເຄື່ອນໄຫວວຽກງານຢູ່ແຂວງຜົ້ງສາລີ.

ທັງນີ້ແຈ້ງຈຸດປະສົງຂອງການເຄື່ອນໄຫວດຳເນີນການເປີດບົ້ນກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2025 ຂອງສ່ວຍສາອາກອນ ແລະ ຂະແໜງຄຸ້ມຄອງຊັບສິນແຫ່ງລັດ ແຂວງຜົ້ງສາລີ ເພື່ອຮັບປະກັນໃຫ້ສ່ວຍສາອາກອນ ແລະ ຂະແໜງຄຸ້ມຄອງຊັບສິນແຫ່ງລັດ ຂອງແຂວງຜົ້ງສາລີ ມີການປ່ຽນແປງ, ປັບປຸງກົນໄກການບໍລິຫານຂອງຕົນ ໃຫ້ສອດຄ່ອງກັບປຶ້ມຄູ່ມືການກວດສອບ ແລະ ລະບົບການຄຸ້ມຄອງພາຍໃນ ຢ່າງເຂັ້ມງວດ.

ທ່ານ ສຸວັນຟູ ລາວລີ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ແລກປ່ຽນຄຳຄິດຄຳເຫັນຕໍ່ກັບຜົນຂອງການກວດສອບໃນໄລຍະຜ່ານມາ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆ ແລະ ສະແດງຄວາມພ້ອມ ໃນການໃຫ້ການຮ່ວມມືໃນການຊຸກຍູ້ຂະແໜງການກ່ຽວຂ້ອງອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບຄະນະທີມງານກວດສອບ ເພື່ອໃຫ້ການລົງເຄື່ອນໄຫວວຽກງານ ບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້.

ທ່ານ ອິນທາ ລືນາມມະຈັກ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ທັງຮັບປະກັນວ່າຈະດຳເນີນການກວດສອບຢ່າງເປັນມືອາຊີບ, ຍຶດໝັ້ນຫຼັກການເປັນກາງ ແລະ ຖືກຕ້ອງຕາມກົດໝາຍ ເພື່ອໃຫ້ຜົນການກວດສອບເປັນປະໂຫຍດຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງແຂວງຜົ້ງສາລີ.

**(ພຸດສະດີ ແສງຈອມຄູນ)**

## ປະທານ ສພຂ ເຄື່ອນໄຫວພົບປະ ຜູ້ມີສິດເລືອກຕັ້ງເມືອງນານ



(ສພຂ) - ວັນທີ 2 ກໍລະກົດຜ່ານມາ, ທ່ານ ບຸນເລື່ອມ ມະນີວົງ ເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ 2 ຈຸດຂອງເມືອງນານຄື: ສຳນັກເມືອງ ແລະ ບ້ານຫ້ວຍຫອຍ ມີຜູ້ເຂົ້າຮ່ວມ 276 ຍິງ 128 ຄົນ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານສະພາບການນຳພາ-ຊີ້ນຳວຽກງານຮອບດ້ານຂອງເມືອງ ໃນໄລຍະ 6 ເດືອນຜ່ານມາ ແລະ ແຜນການ 6 ເດືອນຕໍ່ໜ້າ ຈາກທ່ານ ບົວສີ ພິມມະເສນ ຮອງເລຂາຄະນະບໍລິຫານງານພັກເມືອງ, ປະທານຄະນະກຳມະການປົກຄອງເມືອງນານ; ຈາກນັ້ນ, ທ່ານບຸນເລື່ອມ ມະນີວົງ ໄດ້ມີຄຳເຫັນໂອ້ລົມ ແລະເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ V ໃຫ້ຄະພັກເມືອງ, ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ຕະຫຼອດຮອດອຳນາດການປົກຄອງບ້ານອ້ອມຂ້າງເຫດສະບານ ໃຫ້ຮັບຮູ້ແລະເຂົ້າໃຈຕໍ່ເນື້ອໃນບັນຫາສຳຄັນຂອງຊາດ ທີ່ໄດ້ພິຈາລະນາຮັບຮອງໃນກອງປະຊຸມ ໂດຍສະເພາະໄດ້ຮັບຮູ້ເຂົ້າໃຈເຖິງແນວທາງການປ່ຽນແປງໃໝ່, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 5 ປີ (2026-2023).

ພ້ອມນັ້ນ, ຍັງໄດ້ເປີດໂອກາດໃຫ້ສະເໜີແລກປ່ຽນຄວາມຂັດຂ້ອງໝອງໃຈ ຂອງປະຊາຊົນ ເປັນຕົ້ນການກໍ່ສ້າງຂົວຈົມຂ້າມນ້ຳນານ ຫາບ້ານທ່າລີ່, ການຕິດຕັ້ງໝໍ້ແປງໄຟຟ້າໃຫ້ໂຮງໝໍເມືອງນານ ເນື່ອງຈາກປັດຈຸບັນແມ່ນນຳໃຊ້ໝໍ້ແປງໄຟຮ່ວມກັບບ້ານຂອງປະຊາຊົນ ໄຟຟ້າບໍ່ພຽງພໍ ແລະ ສະເໜີໃຫ້ຊ່ວຍຊຸກຍູ້ໂຄງການສ້ອມແປງເສັ້ນທາງສາມບ້ານ ໄປຫາໜ້າເຂື່ອນນ້ຳຂອງໄຊຍະບູລີ ຕໍ່ກັບບາງຄຳສະເໜີບັນດາພະແນກການ ກໍ່ໄດ້ອະທິບາຍ, ຊີ້ແຈ້ງໃຫ້ອົງການປົກຄອງເມືອງ, ອຳນາດການປົກຄອງບ້ານ ແລະ ຜູ້ມີສິດເລືອກຕັ້ງໄດ້ຮັບຮູ້, ເຂົ້າໃຈຢ່າງທົ່ວເຖິງກັນ; ສ່ວນບາງຄຳສະເໜີທີ່ຕິດພັນກັບຫຼາຍພາກສ່ວນ ຈະນຳໄປປະສານສົມທົບກັບພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ຖືກຕ້ອງຕາມລະບຽບການ ແລະ ທັນເວລາ.

ນອກນັ້ນ, ທ່ານ ບຸນເລື່ອມ ມະນີວົງ ພ້ອມດ້ວຍຄະນະ ຍັງໄດ້ໄປຢ້ຽມຢາມພື້ນຖານການຜະລິດຂອງເມືອງ ທັງຕິດຕາມກວດກາ ພື້ນທີ່ຕົວຈິງຕາມການສະເໜີຂອງເມືອງ ແລະ ມອບເງິນສົດ ແລະ ອຸປະກອນໄອທີ ແກ່ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນານ ລວມມູນຄ່າ 80 ລ້ານກວ່າກີບ ແລະ ມອບເງິນສົດຊຸກຍູ້ໃຫ້ບ້ານເຂດສຳນັກເມືອງ ແລະ ບ້ານຫ້ວຍຫອຍ ລວມ 9 ບ້ານ, ບ້ານລະ 5 ລ້ານກີບ ແລະ ມອບເງິນຊຸກຍູ້ໃຫ້ສູນເສຍອົງຄະ 598 ຈຳນວນ 10 ລ້ານກີບ.

**(ວິລິຍະ ວັນນະສີ)**

## ຮອງປະທານ ສພຂ ເຮັດວຽກກັບຄະນະ ກຳມະການ ປກຊ-ປກສ, ກົດໝາຍ ແລະ ຍຸຕິທຳ



(ສພຂ)-ວັນທີ 30 ມິຖຸນາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ, ທ່ານ ນາງ ຟອງສະໝຸດ ພົງວິຈິດກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ຜູ້ຊີ້ນຳວຽກງານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍ ແລະ ຍຸຕິທຳ ໄດ້ຮ່ວມເຮັດວຽກກັບຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍ ແລະ ຍຸຕິທຳ ສະພາປະຊາຊົນແຂວງ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້, ແມ່ນເພື່ອຕິດຕາມ, ກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງຄະນະກຳມະການດັ່ງກ່າວໃນໄລຍະຜ່ານມາ, ພ້ອມທັງເປັນການຮ່ວມກັນປຶກສາຫາລື, ຄົ້ນຄວ້າ ແລະ ທິດທາງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າໃຫ້ມີຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ຂອງລັດ ເຮັດໃຫ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານກົດໝາຍ ແລະ ຍຸຕິທຳ ພາຍໃນແຂວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ມີປະສິດທິພາບ ແລະ ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງແທ້ຈິງ.

ໂອກາດດັ່ງກ່າວ, ທ່ານ ນາງ ຟອງສະໝຸດ ພົງວິຈິດ ໄດ້ເນັ້ນໜັກໃຫ້ຄະນະກຳມະການດັ່ງກ່າວເອົາໃຈໃສ່ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນ, ເພີ່ມທະວີຄວາມສາມັກຄີເປັນເອກະພາບ ແລະ ສືບຕໍ່ເປັນເສນາທິການທີ່ເຂັ້ມແຂງໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ໃນການຕິດຕາມກວດກາການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃຫ້ປາກົດຜົນເປັນຈິງ.

**(ລະອອງດາວ)**

## ມອບລົດຈັກໃຫ້ ຄສຂ ປະຈຳເຂດເລືອກຕັ້ງ



(ສພຂ) - ວັນທີ 30 ມິຖຸນາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຫຼວງພະບາງ, ທ່ານ ບຸນເລື່ອມ ມະນີວົງ ເລຂາຄະນະບໍລິຫານງານພັກແຂວງ, ປະທານສະພາປະຊາຊົນແຂວງຫຼວງພະບາງ ພ້ອມດ້ວຍຄະນະນຳ ໄດ້ມອບລົດຈັກ ໃຫ້ຫ້ອງການ ສພຂ ປະຈຳເຂດເລືອກຕັ້ງນະຄອນຫຼວງພະບາງ ແລະ 11 ເມືອງ ພາຍໃນແຂວງຫຼວງພະບາງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຫ້ອງການຄະນະສະມາຊິກສະພາປະຊາຊົນແຂວງ(ຄສຂ)ປະຈຳເຂດເລືອກຕັ້ງ ນະຄອນ ແລະ ເມືອງ ຈຳນວນ 12 ຄັນ, ລວມມູນຄ່າ 436,440,000 ກີບ.

# ຫາລືຈັດລຽງບູລິມະສິດນິຕິກຳ



(ສພຂ) - ວັນທີ 17 ກໍລະກົດຜ່ານມາ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ, ໄດ້ມີກອງປະຊຸມປຶກສາຫາລືຈັດລຽງບູລິມະສິດ ນິຕິກຳໃຕ້ກົດໝາຍ ຂອງແຂວງ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ (ສພຂ) ຊຸດທີ V ໂດຍການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ຫົວໜ້າພະແນກການທີ່ກ່ຽວຂ້ອງ, ພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ 20 ທ່ານ, ຍິງ 3 ທ່ານ.

ກອງປະຊຸມໄດ້ພ້ອມກັນປຶກສາຫາລື ແລະ ເປັນເອກະພາບ ຕໍ່ຮ່າງນິຕິກຳໃຕ້ກົດໝາຍຂອງແຂວງ ເພື່ອນຳມາຈັດລຽງບູລິມະສິດ ໃນການສ້າງ ແລະ ປັບປຸງນິຕິກຳ ເຂົ້າໃນກອງປະຊຸມກອງປະຊຸມສະໄໝສາມັນຂອງ ສພຂ ເຊິ່ງນິຕິກຳສ້າງໃໝ່ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງ ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຂ ຊຸດທີ V ປະກອບມີ: ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງເສີມຄວາມສວຍງາມ ຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງລາຄາຊື້-ຂາຍຢາງພາລາຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການເພີ່ມທະວີການແກ້ໄຂບັນຫາ ແລະ ຄຸ້ມຄອງຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ຄົນເຊື້ອຊາດລາວທີ່ເຂົ້າມາດຳເນີນທຸລະກິດ, ຄ້າຂາຍພັກເຊົາ, ອອກແຮງງານ, ອາໄສຢູ່ຖາວອນ, ສ້າງຄອບຄົວກັບພົນລະເມືອງລາວ ແບບບໍ່ຖືກຕ້ອງ ແລະ ເສຍຊີວິດ ຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງກິລາສະນຸກເກີ ຢູ່ແຂວງຫຼວງນ້ຳທາ ແລະ ຈະປັບປຸງຂໍ້ຕົກລົງ ວ່າດ້ວຍກອງທຶນສົງເຄາະຂັ້ນແຂວງ ແລະ ຂໍ້ຕົກລົງ ວ່າດ້ວຍການກຳນົດຂອບເຂດການກຳນົດລາຄາທີ່ດິນ ຢູ່ພາຍໃນແຂວງຫຼວງນ້ຳທາ;

ກອງປະຊຸມສະໄໝສາມັນເທື່ອທີ່3 ຈະປັບປຸງຂໍ້ຕົກລົງວ່າດ້ວຍສິ່ງປຸກສ້າງ ແລະ ເຂດສະຫງວນທາງ ພາຍໃນແຂວງຫຼວງນ້ຳທາ; ກອງປະຊຸມສະໄໝສາມັນເທື່ອທີ່ 4 (ປີ 2027) ມີຂໍ້ຕົກລົງວ່າດ້ວຍນະໂຍບາຍ ແລະ ຫົວໜ່ວຍທົດແທນ ໂຄງການກໍ່ສ້າງພະລັງງານໄຟຟ້າແສງຕາເວັນ ຢູ່ເມືອງຫຼວງນ້ຳທາແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍນະໂຍບາຍແລະຫົວໜ່ວຍທົດແທນ ໂຄງການກໍ່ສ້າງພະລັງງານລົມຢູ່ເມືອງສິງ ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍນະໂຍບາຍ ແລະ ຫົວໜ່ວຍທົດແທນໂຄງການກໍ່ສ້າງສາຍສົ່ງໄຟຟ້າແຮງສູງ 115 KV/22 KV ເມືອງລອງ ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍຄຸ້ມຄອງແຮ່ທາດ ທີ່ແຂວງອະນຸຍາດ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ພາຍໃນແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນພັດທະນາຊົນລະປະທານ ຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງວ່າດ້ວຍການປະມູນຂາຍຊັບສິນ, ວັດຖຸສິ່ງຂອງ ຂອງກາງ ທີ່ສານຕັດສິນເປັນຂອງລັດ ຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຄົນເລ່ລ້ອນຢູ່ພາຍໃນແຂວງຫຼວງນ້ຳທາ; ກອງປະຊຸມສະໄໝສາມັນເທື່ອທີ່ 5 ມີ: ຂໍ້ຕົກລົງ ວ່າດ້ວຍການສົ່ງເສີມຈູນລະວິສາຫະກິດຂະໜາດໜ້ອຍ ແລະ ຂະໜາດກາງ ຢູ່ແຂວງຫຼວງນ້ຳທາ; ກອງປະຊຸມສະໄໝສາມັນເທື່ອທີ່ 6 (ປີ 2028) ມີ: ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄວບຄຸມໄຂ້ຍຸງລາຍ (5ປ) ເພື່ອຢຸດຕິການລະບາດຂອງພະຍາດໄຂ້ຍຸງລາຍ ຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍຄ່າບໍລິການຜ່ານດ່ານສາກົນ ເພື່ອສະໜັບສະໜູນວຽກງານຕອບໂຕ້ພາວະສຸກເສີນ ຂອງໜ່ວຍງານປະຈຳດ່ານຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງວ່າດ້ວຍການກຳນົດຂົງເຂດປ່າສະຫງວນ ສັດນ້ຳ-ສັດປ່າ ຢູ່ແຂວງຫຼວງນ້ຳທາ; ກອງປະຊຸມສະໄໝສາມັນເທື່ອທີ່ 7 (ປີ 2028) ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ; ຂໍ້ຕົກລົງ ວ່າດ້ວຍ ການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ ຢູ່ແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດງານ ແລະ ບຸນປະເພນີ ພາຍໃນແຂວງຫຼວງນ້ຳທາ; ກອງປະຊຸມສະໄໝສາມັນເທື່ອທີ່ 8 (ປີ 2029) ມີຂໍ້ຕົກລົງ ວ່າດ້ວຍສິ່ງເສດເຫຼືອ ພາຍໃນແຂວງຫຼວງນ້ຳທາ; ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງນ້ຳ, ຊັບພະຍາກອນແຫຼ່ງນ້ຳ ແລະ ດິນບໍລິເວນນ້ຳ.

ທ່ານ ກົງເພັດ ແກ້ວບົວພາ ໄດ້ເນັ້ນໜັກໃຫ້ເປັນເຈົ້າການເອົາໃຈໃສ່ຊຸກຍູ້ບັນດາພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ໃນການສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ 5 ປີຂອງແຂວງ ໃຫ້ໄດ້ຕາມແຜນທີ່ໄດ້ສະເໜີດັດແກ້ ທີ່ຄະນະປະຈຳສະພາປະຊາຊົນແຂວງຈະໄດ້ຮັບຮອງເອົາ; ພາກສ່ວນທີ່ກ່ຽວຂ້ອງແລະຮັບຜິດຊອບແຕ່ລະນິຕິກຳ ຕ້ອງມີຄວາມພ້ອມ ເປັນຕົ້ນແມ່ນທາງດ້ານງົບປະມານ, ບຸກຄະລາກອນ ແລະ ຕ້ອງເຂົ້າຮ່ວມແຕ່ຫົວທີ່ ເພື່ອຕິດພັນກັບການຕິດຕາມກວດກາ ດ້ານເນື້ອໃນ, ໂຄງສ້າງ, ພາກ, ໝວດ ແລະ ມາດຕາ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນ.



## ລະນຶກ...

(ຕໍ່ຈາກໜ້າ 1)

ທາງປະຫວັດສາດທີ່ດີເດັ່ນ ແລະ ກ້າແກ່ນຂອງການປະຕິວັດກູບາ ຄົບຮອບ 100 ປີ (13 ສິງຫາ 1926 - 13 ສິງຫາ 2026) ເຊິ່ງສະຫາຍ ສຈ. ປອ. ຈະເລີນ ເຍຍປາວເຮີ ກ່າວວ່າ: ຂ້າພະເຈົ້າຮູ້ສຶກພາກພູມໃຈທີ່ໄດ້ຮ່ວມກັບບັນດາສະຫາຍ ແລະ ເພື່ອນມິດຈາກທົ່ວໂລກ ມີຄຳເຫັນຕໍ່ສະຫາຍຟີແດນ ກັສໂຕຣ ຜູ້ນຳທາງປະຫວັດສາດທີ່ດີເດັ່ນ ແລະ ກ້າແກ່ນຂອງການປະຕິວັດກູບາ. ສຳລັບປະຊາຊົນລາວບັນດາເຜົ່າກໍຄືບັນດາປະຊາຊາດທີ່ຮັກຫອມສັນຕິພາບ ແລະ ຄວາມເປັນທຳໃນທົ່ວໂລກ, ສະຫາຍ ຟີແດນ ແມ່ນເພື່ອນມິດທີ່ຍິ່ງໃຫຍ່ແລະສັນຍະລັກດີເດັ່ນແຫ່ງການຕໍ່ສູ້ຕ້ານຈັກກະພັດເພື່ອປົກປ້ອງເອກະລາດແຫ່ງຊາດ ແລະ ຄວາມກ້າວໜ້າທາງສັງຄົມ; ນັບແຕ່ປີ 1959 ຈົນຮອດວັນທີ່ສິ້ນລົມຫາຍໃຈນັ້ນ, ສະຫາຍ ຟີແດນ ໄດ້ນຳເອົາການປະຕິວັດສັງຄົມນິຍົມຢູ່ກູບາ ກ້າວໄປຂ້າງໜ້າຢ່າງມີໄຊ ໃນທ່າມກາງນະໂຍບາຍຮຸກຮານທາງການທະຫານ, ແຊກແຊງທາງການເມືອງ ແລະ ປິດລ້ອມທາງເສດຖະກິດ ຢ່າງຕໍ່ເນື່ອງຂອງ 11 ອຳນາດການປົກຄອງຂອງສະຫະລັດ ລວມທັງຄວາມພະຍາຍາມລອບສັງຫານຂອງຈັກກະພັດຫຼາຍກວ່າ 600 ຄັ້ງ.

ມາຮອດປັດຈຸບັນ, ພາຍໃຕ້ການຊີ້ນຳຍຸດທະສາດ ແລະ ອຸດົມການປະຕິວັດອັນໜັກແໜ້ນຂອງສະຫາຍ ຟີແດນ ໃນຕະຫຼອດໄລຍະເກືອບ 6 ທົດສະວັດ, ກູບາສັງຄົມນິຍົມ ຈຶ່ງສາມາດຢືນຢູ່ແຖວໜ້າໃນອາເມລິກາລາຕິນທາງດ້ານການສຶກສາ, ສາທາລະນະສຸກ, ປ້ອງກັນຊາດ ແລະເຕັກໂນໂລຊີຊີວະພາບ; ສັງຄົມກູບາມີຄວາມສະຫງົບປອດໄພ ແລະ ປະຊາຊົນກູບາມີຄວາມສາມັກຄີເປັນຈິດໜຶ່ງໃຈດຽວ ແລະ ຟົດຟື້ນປະຕິວັດຢູ່ອ້ອມຂ້າງພັກກອມມູນິດກູບາຢ່າງສະເໝີຕົ້ນສະເໝີປາຍ.

ສິ່ງໜຶ່ງອີກທີ່ໜ້າພາກພູມໃຈທີ່ສະຫາຍ ຟີແດນ ໄດ້ສ້າງຈິດສຳນຶກອັນໄດ້ກາຍເປັນຫີນສີລາແລະຫຼັກການທີ່ບໍ່ປ່ຽນແປງຂອງການປະຕິວັດກູບາ ຄືຄວາມສາມັກຄີສາກົນ! ໂດຍຢຶດໝັ້ນນ້ຳໃຈສາກົນກຳມະຊີບ, ສະຫາຍ ຟີແດນ ໄດ້ເວົ້າຢູ່ສະເໝີວ່າ ພວກເຮົາຕ້ອງແບ່ງປັນສິ່ງທີ່ມີໃຫ້ແກ່ເພື່ອນ ບໍ່ແມ່ນສິ່ງທີ່ເຫຼືອຈາກຄວາມຕ້ອງການ; ຈາກແນວຄິດດັ່ງກ່າວນີ້, ເຖິງແມ່ນວ່າກູບາຍັງພົບຄວາມຫຍຸ້ງຍາກຫຼາຍຢ່າງຢູ່ພາຍໃນປະເທດຂອງຕົນກໍຕາມ ນັບແຕ່ປີ 1963 ເປັນຕົ້ນມາ ສະຫາຍ ຟີແດນ ໄດ້ຕັດສິນໃຈສົ່ງແພດ ແລະ ຊ່ຽວຊານດ້ານຕ່າງໆຫຼາຍກວ່າ 5 ແສນຄົນ ໄປປະຕິບັດໜ້າທີ່ສາກົນຢູ່ຫຼາຍກວ່າ 150 ປະເທດໃນທົ່ວໂລກ ແລະ ໃຫ້ທຶນແກ່ຊາວໜຸ່ມຫຼາຍກວ່າ 52 ພັນຄົນ ຈາກ 132 ປະເທດ ມາສຶກສາຢູ່ປະເທດກູບາ, ໃນນີ້ລວມທັງການສົ່ງໜ່ວຍແພດສຸກເສີນໄປຊ່ວຍປະເທດຕ່າງໆ ໃນເວລາເກີດໄພພິບັດທາງທຳມະຊາດ ແລະ ໃນເວລາເກີດໂລກລະບາດທີ່ຮ້າຍແຮງຕ່າງໆ.

ໃນເວທີສາກົນ, ໃນຖານະທີ່ກູບາເປັນປະທານຂະບວນການປະເທດບໍ່ຮ່ວມກຸ່ມເຖິງສອງຄັ້ງ ແລະ ປະທານກຸ່ມປະເທດ 77 ແລະ ຈີນ ສອງຄັ້ງ, ສະຫາຍ ຟີແດນ ໄດ້ສະເໜີແນວທາງການທູດທີ່ຊັດເຈນ ແລະ ໃນການຕໍ່ສູ້ເພື່ອສັນຕິພາບ, ເອກະລາດແຫ່ງຊາດ ແລະ ເພື່ອລະບຽບເສດຖະກິດສາກົນທີ່ເປັນທຳ ໂດຍສະເພາະແມ່ນການປົກປ້ອງຜົນປະໂຫຍດຂອງບັນດາປະເທດກຳລັງພັດທະນາ ບົນພື້ນຖານຂອງຫຼັກການກົດໝາຍສາກົນ ແລະ ກົດບັດສະຫະປະຊາຊາດ!

ຈາກຍຸດທະສາດ ແລະ ວິໄສທັດປະຕິວັດຂອງສະຫາຍ ຟີແດນ, ກູບາໃນປັດຈຸບັນ ຈຶ່ງໄດ້ກາຍເປັນຄັນທຸງ ແລະ ຫົວຈັກໃນບັນດາປະເທດອາເມລິກາລາຕິນເພື່ອກ້າວໄປສູ່ສັງຄົມທີ່ດີກວ່າເກົ່າທີ່ປາດສະຈາກການຄອບງຳຈາກພາຍນອກ.

ກ່ຽວກັບການພົວພັນມິດຕະພາບກັບລາວເຮົາ, ສະຫາຍ ຟີແດນ ໄດ້ຊີ້ນຳໃຫ້ສູນກາງພັກ ຈັດຕັ້ງຄະນະກຳມະການເພື່ອຄວາມສາມັກຄີກັບຫວຽດນາມ, ລາວ ແລະ ກຳປູເຈຍ ໃນປີ 1968 ເພື່ອເປັນກຳລັງໃຈສະໜັບສະໜູນການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາຂອງປະຊາຊົນລາວ. ກ່ອນປີ 1975, ສະຫາຍຟີແດນ ໄດ້ມີໂອກາດຕ້ອນຮັບ ແລະ ພົບປະກັບສະຫາຍ ພູມີ ວົງວິຈິດ ແລະ ສະຫາຍ ໜູຮັກ ພູມສະຫວັນ ຢູ່ນະຄອນຫຼວງລາຮາວານ ໃນຖານະຄະນະນຳຂອງສູນກາງແນວລາວຮັກຊາດ ແລະ ໄດ້ຈັດສົ່ງທີມແພດຊຸດທຳອິດໄປຊ່ວຍປະຊາຊົນລາວໃນເຂດທີ່ໝັ້ນປະຕິວັດຢູ່ເມືອງວຽງໄຊແຂວງຫົວພັນ; ພາຍຫຼັງການສະຖາປະນາສປປລາວ, ສະຫາຍ ຟີແດນ ຍັງໄດ້ມີໂອກາດຕ້ອນຮັບແລະພົບປະກັບບັນດາຜູ້ນຳຮຸ່ນທຳອິດຂອງພັກປະຊາຊົນປະຕິວັດລາວ ທັງໝົດ 7 ສະຫາຍຢູ່ນະຄອນຫຼວງລາຮາວານ ໂດຍສະເພາະແມ່ນການຢ້ຽມຢາມມິດຕະພາບຢູ່ກູບາຂອງສະຫາຍ ໄກສອນ ພົມວິຫານ ເມື່ອເດືອນກັນຍາ 1976 ທີ່ຈະຄົບຮອບ 50 ປີ ໃນເດືອນກັນຍານີ້, ອັນນີ້ ແມ່ນຂີດໝາຍທີ່ສຳຄັນໃນການພົວພັນຖານມິດສະຫາຍອ້າຍນ້ອງ ເຊິ່ງໄດ້ສະແດງອອກໃນຖະແຫຼງການຮ່ວມລະຫວ່າງສອງປະເທດພວກເຮົາ. ບົນຈິດໃຈດັ່ງກ່າວນີ້, ການຊ່ວຍເຫຼືອເຊິ່ງກັນແລະກັນຢ່າງຈິງໃຈແມ່ນສຸດທີ່ສຳຄັນ ເຊິ່ງປະຊາຊົນລາວພວກຂ້າພະເຈົ້າຍາມໃດກໍຮູ້ບຸນຄຸນຕໍ່ສະຫາຍ ຟີແດນ, ຕໍ່ພັກ, ລັດ ແລະ ປະຊາຊົນກູບາ.

ໃນໂອກາດຄົບຮອບ 100 ປີ ທີ່ພວກເຮົາພ້ອມກັນລະນຶກເຖິງຜົນງານ ແລະ ຄຸນງາມຄວາມດີທີ່ສະຫາຍ ຟີແດນ ໄດ້ປະໄວ້ເປັນມໍລະດົກອັນລ້ຳຄ່ານີ້, ອີກເທື່ອໜຶ່ງ ໃນນາມປະທານສະມາຄົມມິດຕະພາບລາວ-ກູບາ, ພວກເຮົາຈະເຮັດສຸດຄວາມສາມາດເພື່ອສືບຕໍ່ເປັນສ່ວນໜຶ່ງໃນແນວຫຼັງຍຸດທະສາດສຳລັບການສະໜັບສະໜູນການຕໍ່ສູ້ຂອງປະຊາຊົນກູບາທີ່ພິລະອາດຫານ ໃນການປົກປັກຮັກສາປະເທດຊາດສັງຄົມນິຍົມ, ຕ້ານການປິດລ້ອມ ແລະ ການລົງໂທດທຸກຮູບແບບຂອງສະຫະລັດ!

ທ້າຍສຸດນີ້, ຂ້າພະເຈົ້າເຊື່ອໝັ້ນຢ່າງແຮງກ້າວ່າ ການປະຕິວັດກູບາພາຍໃຕ້ອຸດົມການທີ່ສະຫາຍ ຟີແດນ ໄດ້ປູກຝັງໄວ້ ຈະສືບຕໍ່ກ້າວໄປຂ້າງໜ້າຢ່າງມີໄຊ!

ແນວຄິດ, ທັດສະນະ ແລະ ອຸດົມການຂອງສະຫາຍ ຟີແດນ ຍືນຍົງຢູ່ໃນດວງໃຈຂອງພວກເຮົາຕະຫຼອດໄປ!



## ຮອງປະທານ...

(ຕໍ່ຈາກໜ້າ 1)

ຈັນ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ; ສະບັບເລກທີ 189/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ພູວົງ ອຸ່ນຄຳແສນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ແລະ ທ່ານ ນາງ ສົມພອນ ໂສພິລາວັນ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ; ສະບັບເລກທີ 197/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ພອຍຄຳ ຮຸ່ງບຸນຍວງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ແລະ ທ່ານ ນາງ ຄຳສີ ສິດທິວໍລະດາ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ. ທ່ານຮອງປະທານສະພາແຫ່ງຊາດ ນາງ ສູນທອນ ໄຊຍະຈັກ ໄດ້ໃຫ້ກຽດມອບມະຕິດັ່ງກ່າວໃຫ້ແກ່ປະທານ ແລະ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳ 3 ເຂດເລືອກຕັ້ງດັ່ງກ່າວ.

ທີ່ຊຽງຂວາງແຂວງ, ຄະນະຈັດຕັ້ງແຂວງ ຍັງໄດ້ຜ່ານມະຕິຕົກລົງຂອງຄະນະເລຂາທິການສູນກາງພັກສະບັບເລກທີ 143/ຄລສພ ແລະ ສະບັບເລກທີ 144/ຄລສພ, ລົງວັນທີ 06/7/2026 ວ່າດ້ວຍການອະນຸມັດໃຫ້ທ່ານ ບຸນໂຮມ ເທດທານີ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຊຸດທີ IV ແລະ ທ່ານ ວຽງໄຊ ສີວິໄລ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງຊຽງຂວາງຊຸດທີ IV ພັກການ-ຮັບອຸດໜູນບຳນານ; ມະຕິຕົກລົງຂອງຄະນະປະຈຳພັກແຂວງ ສະບັບເລກທີ 83/ຄປພຂ ແລະ ສະບັບເລກທີ 84/ຄປພຂ, ລົງວັນທີ 09/6/2026 ວ່າດ້ວຍການອະນຸມັດໃຫ້ທ່ານ ໄມສີ ວຽງວິໄລ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ທ່ານ ແສງເດືອນ ຈັນທະລັງສີ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ພັກການ-ຮັບອຸດໜູນບຳນານ.

ໂອກາດເຂົ້າຮ່ວມພິທີປະກາດການຈັດຕັ້ງດັ່ງກ່າວ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດຮອບດ້ານຂອງແຂວງພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ, ອຳນາດການປົກຄອງຂອງແຂວງ ທັງສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງເປັນຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະແດງຄວາມເຊື່ອໝັ້ນວ່າ ຄະນະ ສສຊ ປະຈຳເຂດເລືອກຕັ້ງ ຈະນຳພາ-ຊີ້ນຳວຽກງານຄະ ນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຂອງຕົນ ໂດຍຕ້ອງມີການວາງແຜນການເຄື່ອນໄຫວເປັນແຕ່ລະໄລຍະ; ມີການສະຫຼຸບຕີລາຄາລາຍງານຂັ້ນເທິງ ໂດຍອີງໃສ່ແຜນການເຄື່ອນໄຫວຂອງສະພາແຫ່ງຊາດ (ສພຊ), ຄະນະປະຈຳສະພາແຫ່ງຊາດ ກໍຄືຄະນະພັກແຂວງວາງອອກ ແລະ ທັງປະສານສົມທົບກັບຄະນະປະຈຳສະພາປະຊາຊົນແຂວງ ກໍຄືອຳນາດການປົກຄອງແຂວງເພື່ອຄົ້ນຄວ້າຈັດຕັ້ງຜັນຂະຫຍາຍບັນດາແຜນງານ, ໂຄງການ ທີ່ ສພຊ ວາງອອກໃນ 5 ປີຕໍ່ໜ້າ ໂດຍໃຫ້ສອດຄ່ອງກັບຈຸດພິເສດ, ຄວາມເປັນຈິງແລະທ່າແຮງຂອງເຂດເລືອກຕັ້ງຂອງຕົນ; ມີກົນໄກການປະສານງານກັບບັນດາກຳມາທິການຂອງສພຊ ໃນການປະຕິບັດສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດຕາມ 3 ພາລະບົດບາດທີ່ກົດໝາຍກຳນົດໄວ້.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະເໜີໃຫ້ອຳນາດການປົກຄອງແຂວງ ກໍຄືອຳນາດການປົກຄອງທຸກຂັ້ນ, ອົງການຈັດຕັ້ງຂັ້ນແຂວງ ຈຶ່ງໄດ້ໃຫ້ການຮ່ວມມື, ສະໜັບສະໜູນການເຄື່ອນໄຫວຂອງສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກໍຄືສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງ ສສຊ-ສສຂ ເພື່ອເຮັດສຳເລັດໜ້າທີ່ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນໃນເຂດເລືອກຕັ້ງຂອງຕົນ.

**(ນາງ ອາລິນ ສຸພົມມະປະດິດ)**




## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ລະຫວ່າງວັນທີ 28-31 ກໍລະກົດ 2026, ທ່ານ ໂພໄຊ ໄຂຄຳພິທູນ ກຳມະການສູນກາງພັກ, ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ ທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ແລະ ຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະໂອ້ລົມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດຊຸດທີ X ຢູ່ 3 ເມືອງຂອງແຂວງສະຫວັນນະເຂດ ຄື: ຈຳພອນ, ເຊໂປນ ແລະ ວິລະບູລີ, ໂດຍມີບັນດາທ່ານຄະນະປະຈຳ ແລະ ກຳມະການພັກແຂວງ, ພະນັກງານຫຼັກແຫຼ່ງ, ນາຍ ແລະ ພົນທະຫານ-ຕຳຫຼວດ, ອົງການຈັດຕັ້ງເມືອງ ແລະ ຕາແສງ ເຂົ້າຮ່ວມຮັບຟັງຢ່າງພ້ອມພຽງ.

ທ່ານ ໂພໄຊ ໄຂຄຳພິທູນ ໄດ້ເຜີຍແຜ່ເນື້ອໃນມະຕິກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ X ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2026 ເຊິ່ງລັດຖະບານໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດໄດ້ຫຼາຍຄາດໝາຍ ແລະ ມີຄວາມຄືບໜ້າດີ ເປັນຕົ້ນ: ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າໄດ້ຮັບການປັບປຸງດີຂຶ້ນ, ການພັດທະນາເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ເສດຖະກິດມະຫາພາກມີສະຖຽນລະພາບ; ເຖິງຢ່າງໃດກໍຕາມ, ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ຊຸກຍູ້ການປະຕິບັດຕາມກົດໝາຍຢ່າງເຂັ້ມງວດແລະສຸມໃສ່ການເກັບລາຍຮັບດ້ວຍການຫັນເປັນທັນສະໄໝທົ່ວປະເທດ, ເຂົ້າສູ່ລະບົບເທື່ອລະກ້າວ, ສາມາດເຊື່ອມຕໍ່ກັບທຸກຂະແໜງການ, ມີນະໂຍບາຍການດຶງດູດການລົງທຶນທີ່ຊັດເຈນ, ສືບຕໍ່ເກັບລາຍຮັບງົບປະມານຈາກການຂຸດຄົ້ນ ແລະ ສົ່ງອອກແຮ່ທາດ ໃຫ້ຄົບຖ້ວນຕາມກົດໝາຍ, ຫຼຸດຜ່ອນການຍົກເວັ້ນ ແລະ ຜ່ອນຜັນພາສີ-ອາກອນ ທີ່ຈະເຮັດໃຫ້ລັດເສຍລາຍຮັບງົບປະມານ, ຊຸກຍູ້ສົ່ງເສີມ ແລະ ອຳນວຍຄວາມສະດວກໃນການເຂົ້າຫາແຫຼ່ງທຶນຂອງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສືບຕໍ່ດຳເນີນການປະຕິຮູບລັດວິສາຫະກິດໃຫ້ມີຄວາມແຂງແຮງ, ມີຄຸນນະພາບແລະມີປະສິດທິຜົນ. ຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໄລຍະປີ 2027-2030 ເນື່ອງຈາກມີຄວາມຈຳເປັນ ແລະ ຮີບດ່ວນ ເພື່ອລະດົມກຳລັງແຮງສັງລວມທົ່ວສັງຄົມ ໃນການແກ້ໄຂບັນຫາດັ່ງກ່າວຢ່າງຕັ້ງໜ້າ, ສຸມໃສ່ພື້ນຖານໂຄງລ່າງຢູ່ເຂດຊົນນະບົດ, ເຂດຫ່າງໄກສອກຫຼີກ, ເຂດພື້ນຖານການປະຕິວັດ ແລະ ເຂດຊາຍແດນໃຫ້ມີຄວາມສະດວກສະບາຍຂຶ້ນ ເຊິ່ງຈະສູ້ຊົນສ້າງຄອບຄົວພົ້ນທຸກ ໃຫ້ໄດ້ຫຼາຍກວ່າ 100,000 ຄອບຄົວ, ອັດຕາສ່ວນຄອບຄົວທຸກຍາກ ຫຼຸດໃຫ້ຍັງເຫຼືອ 1 ຕົວເລກ, ສ້າງບ້ານພົ້ນທຸກ ໃຫ້ໄດ້ຫຼາຍກວ່າ 1,000 ບ້ານ, ສ້າງເມືອງພົ້ນທຸກໃຫ້ໄດ້ຫຼາຍກວ່າ 25 ເມືອງແລະສ້າງບ້ານຈຸດສຸມຕົວແບບໃນການແກ້ໄຂຄວາມທຸກຍາກ ໃຫ້ໄດ້ຢ່າງໜ້ອຍແຂວງລະ 4-5 ບ້ານ; ນອກຈາກນີ້, ຈະສຸມໃສ່ການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກຢູ່ຊົນນະບົດ ເພື່ອຮັບປະກັນການດຳລົງຊີວິດ, ການຜະລິດແລະການເຂົ້າເຖິງການບໍລິການດ້ານສາທາລະນຸປະໂພກຢ່າງທົ່ວເຖິງ ແລະ ຍືນຍົງ.

ນອກຈາກການເຜີຍແຜ່ເອກະສານແລ້ວ, ທ່ານ ໂພໄຊ ໄຂຄຳພິທູນ ແລະ ຄະນະ ພ້ອມດ້ວຍການນຳຂອງເມືອງ ຍັງໄດ້ລົງຕິດຕາມ ແລະ ຊຸກຍູ້ການກໍ່ສ້າງທາງເບຕົງເສີມເຫຼັກເຂົ້າຫ້ອງການຕາແສງແກ້ງກອກ, ເມືອງຈຳພອນ; ຢ້ຽມຢາມໂຮງຮຽນກິນນອນຊົນເຜົ່າເມືອງເຊໂປນ, ຕິດຕາມຄວາມຄືບໜ້າໂຄງການກໍ່ສ້າງໂຮງຮຽນວິຊາຊີບແຂວງສະຫວັນນະເຂດ, ເຮັດວຽກກັບຄະນະຄຸ້ມຄອງດ່ານສາກົນແດນສະຫວັນເມືອງເຊໂປນ; ຢ້ຽມຢາມບໍ່ຄຳເຊໂປນ ທີ່ເມືອງວິລະບູລີ.

## ປະກາດ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 31 ກໍລະກົດ 2026 ທີ່ຫ້ອງປະຊຸມຫ້ອງວ່າການແຂວງຫົວພັນ, ໄດ້ມີພິທີປະກາດກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ມອນໄຊ ລາວມົວຊື່ງ ກຳມະການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ); ເຂົ້າຮ່ວມມີທ່ານ ພຸດພັນ ແກ້ວວົງໄຊ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ); ບັນດາທ່ານຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະພະແນກການອ້ອມຂ້າງ, ຄະນະຫ້ອງວ່າການ ແລະ ພະນັກງານເສນາທິການຂອງ ສພຂ.

ໃນພິທີ, ໄດ້ຮັບຟັງລາຍງານສະພາບການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ຈາກທ່ານ ນາງ ສວຍເພັດ ທອງສົມບັດ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານຮອງຫົວໜ້າກົມວຽກງານສະມາຊິກສະພາແຫ່ງຊາດ ໄດ້ອ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 188/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານພຸດພັນ ແກ້ວວົງໄຊເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ທ່ານ ນາງ ສວຍເພັດ ທອງສົມບັດເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ; ຈາກນັ້ນ, ທ່ານ ມອນໄຊ ລາວມົວຊື່ງ ໄດ້ມອບມະຕິດັ່ງກ່າວໃຫ້ແກ່ປະທານ ແລະ ຮອງປະທານ ຄສຊ.

ໂອກາດນີ້, ທ່ານ ມອນໄຊ ລາວມົວຊື່ງ ໄດ້ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງ ເພື່ອນຳພາ-ຊີ້ນຳວຽກງານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ພ້ອມທັງເນັ້ນໜັກໃຫ້ ຄສຊ ຕ້ອງມີກົນໄກການປະສານງານກັບບັນດາກຳມາທິການ ແລະ ຫ້ອງວ່າການສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ຄະນະພັກ, ອົງການປົກຄອງແຂວງຢ່າງປົກກະຕິ ໃນການປະຕິບັດສິດ ແລະ ໜ້າທີ່ຂອງ ສພຊ ແລະ ຄປຈສພຊ ຢູ່ເຂດເລືອກຕັ້ງຂອງຕົນ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ບັນດາໂຄງການລົງທຶນທີ່ພວມຈັດຕັ້ງປະຕິບັດຢູ່ເຂດເລືອກຕັ້ງຂອງຕົນ ທີ່ສົ່ງຜົນກະທົບໂດຍກົງຕໍ່ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ; ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃນການສ້າງ ແລະ ປັບປຸງນິຕິກຳຂອງທ້ອງຖິ່ນ, ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ ແລະ ການຕິດຕາມກວດກາ. ທ່ານຮອງປະທານສະພາແຫ່ງຊາດຍັງໄດ້ສະເໜີໃຫ້ອຳນາດການປົກຄອງແຂວງ ກໍຄືອຳນາດການປົກຄອງທຸກຂັ້ນ ຈົ່ງເພີ່ມທະວີຄວາມເອົາໃຈໃສ່ໃຫ້ການຮ່ວມມື, ສະໜັບສະໜູນການເຄື່ອນໄຫວຂອງ ສສຊ-ສສຂ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວ ເພື່ອເຮັດສຳເລັດໜ້າທີ່ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນໃນເຂດເລືອກຕັ້ງຂອງຕົນ.

**(ນາງ ກຸກກິກ ບຸດດາໄຊ)**



## ສຸກສະບາຍຫາຍໂຣຄາ

# ໝາກໄມ້ຫຼຸດຄວາມດັນເລືອດສູງ



ພະຍາດຄວາມດັນເລືອດສູງ ເປັນໄພງຽບທີ່ມັກຈະບໍ່ສະແດງອາການທາງກາຍ ຜູ້ປ່ວຍພະຍາດຄວາມດັນເລືອດສູງຈຶ່ງຕ້ອງຮັບປະທານຢາເພື່ອຫຼຸດຄວາມດັນຢູ່ຕະຫຼອດ ແຕ່ຫາກໃຜຢາກຫຼຸດຄວາມດັນແບບບໍ່ໃຊ້ຢາ ອາຫານການກິນກໍຊ່ວຍຫຼຸດຄວາມດັນໃຫ້ເຮົາໄດ້ເຊັ່ນກັນ ແລະ ມື້ນີ້ ພວກເຮົາກໍມີໝາກໄມ້ຊ່ວຍຫຼຸດຄວາມດັນມາແນະນຳທ່ານທີ່ເປັນຄວາມດັນສູງ ທີ່ຢາກຫຼຸດຄວາມດັນເລືອດດ້ວຍຕົນເອງ ດັ່ງນີ້:

1. ໝາກກ້ວຍ: ເປັນໝາກໄມ້ທີ່ຈັດຢູ່ໃນກຸ່ມໝາກໄມ້ທີ່ອຸດົມໄປດ້ວຍທາດໂປແທດຊຽມ ຫຼື ໝາກໄມ້ທີ່ມີໂປແທດຊຽມຫຼາຍເປັນອັນດັບຕົ້ນໆແລະຍັງເປັນໝາກໄມ້ທີ່ມີໂຊດຽມໜ້ອຍ; ດັ່ງນັ້ນ, ຈຶ່ງຊ່ວຍບຳລຸງລະບົບຫົວໃຈແລະຫຼອດເລືອດໄດ້ຢ່າງມີປະສິດທິພາບ;

2. ໝາກມ່ວງ: ເປັນໝາກໄມ້ທີ່ມີສານອາຫານທີ່ສຳຄັນຕໍ່ລະບົບການໝູນວຽນຂອງເລືອດ ເຊັ່ນ ໂປແທດຊຽມ ໂດຍໝາກມ່ວງ 100 ກຼາມ ມີໂປແທດຊຽມປະມານ 186 ມິນລີກຼາມ ແລະ ຍັງເປັນໝາກໄມ້ສີເຫຼືອງທີ່ອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫຼະເຊິ່ງງານວິໄຈທີ່ຕີພິມໃນວາລະສານ Hypertension Research ເປີດເຜີຍວ່າ ການຮັບປະທານອາຫານທີ່ມີເບຕ້າແຄໂຣທີນ ມີສ່ວນຊ່ວຍຄວບຄຸມຄວາມດັນເລືອດໄດ້;

3. ໝາກກ້ຽງ: ເປັນໝາກໄມ້ທີ່ມີໄຟເບີ ແລະ ວິຕາມິນຊີຫຼາຍ ຈຶ່ງເປັນໝາກໄມ້ຊ່ວຍຫຼຸດຄວາມດັນອີກຊະນິດໜຶ່ງທີ່ໜ້າສົນໃຈ ເພາະຫາກິນງ່າຍ, ມີເກືອບທຸກລະດູການ ທີ່ສຳຄັນໝາກກ້ຽງຍັງສາມາດດັດແປງເປັນອາຫານໄດ້ຫຼາຍຊະນິດນຳອີກ;

4. ອາໂວກາໂດ: ອຸດົມໄປດ້ວຍອາຊິດໂອເລອິກ ເຊິ່ງເປັນອາຊິດທີ່ຊ່ວຍໃນການຄວບຄຸມຄວາມດັນເລືອດໄດ້; ນອກຈາກນີ້, ໃນອາໂວກາໂດ ຍັງມີໂປແທດຊຽມ, ໂຟເລດ, ວິຕາມິນຊີ ແລະ ໄຟເບີ ທີ່ເປັນສານອາຫານທີ່ດີຕໍ່ຫົວໃຈ ແລະ ລະບົບໝູນວຽນເລືອດ ທີ່ສຳຄັນຄືມີອາຊິດໄຂມັນຊະນິດດີທີ່ຈະຊ່ວຍຫຼຸດລະດັບໄຂມັນຊະນິດເຫຼວ ຫຼື ຄໍເລດເຕີລໍໃນເລືອດໄດ້ ຈຶ່ງຊ່ວຍອຳນວຍຄວາມສະດວກໃຫ້ການໝູນວຽນເລືອດເປັນໄປຢ່າງສະດວກ ຮ່າງກາຍກໍຄວບຄຸມລະດັບຄວາມດັນເລືອດໄດ້ດີຂຶ້ນນັ້ນເອງ;

5. ໝາກແຕງໂມ: ຜົນການສຶກສາຈາກ America Journal of Hypertension ພົບວ່າ ສານສະກັດຈາກໝາກແຕງໂມມີສ່ວນຊ່ວຍຫຼຸດລະດັບຄວາມດັນເລືອດໃນຜູ້ປ່ວຍທີ່ເປັນພະຍາດອ້ວນ ລວມໄປເຖິງຜູ້ປ່ວຍອາຍຸຫຼາຍທີ່ມີພາວະຄວາມດັນເລືອດສູງໃນລະດັບ 1 ໄດ້ດີ; ເພາະໝາກແຕງໂມເປັນໝາກໄມ້ທີ່ມີສານຕໍ່ຕ້ານອະນຸມູນອິດສະຫຼະເຊັ່ນ ເບຕ້າແຄໂຣທີນ, ໂປແທດຊຽມ ແລະ ວິຕາມິນຊີ ໃນລະດັບທີ່ສົ່ງຜົນຕໍ່ຄວາມດັນເລືອດຂອງເຮົາໄດ້ດີ;

6. ແຄນຕາລູບ: ເປັນໝາກໄມ້ເນື້ອສີສົ້ມອ່ອນໆ, ມີສານຕໍ່ຕ້ານອະນຸມູນອິດສະຫຼະຢ່າງເບຕ້າແຄໂຣທີນ ຢູ່ພໍສົມຄວນ ແລະ ຍັງເປັນໝາກໄມ້ທີ່ໃຫ້ວິຕາມິນຊີຫຼາຍ ໃນແຄນຕາລູບ ¼ ຂອງໝາກ ສາມາດໃຫ້ວິຕາມິນຊີ ໃນປະລິມານທີ່ຮ່າງກາຍຕ້ອງການໃນແຕ່ລະມື້ ຈຶ່ງຖືໄດ້ວ່າເປັນໝາກໄມ້ທີ່ຊ່ວຍຫຼຸດຄວາມດັນເລືອດທີ່ໜ້າສົນໃຈຫຼາຍແລະແນ່ນອນວ່າແຄນຕາລູບກໍເປັນໝາກໄມ້ທີ່ມີໄຟເບີຫຼາຍ ແລະ ມີແຄລໍຣີໜ້ອຍນຳອີກ ຈຶ່ງເໝາະກັບຄົນທີ່ຢາກຫຼຸດນ້ຳໜັກເຊັ່ນກັນ;

7. ກີວີ: ເປັນໝາກໄມ້ທີ່ມີຄຸນຄ່າທາງໂພຊະນາການ ບໍ່ວ່າຈະເປັນວິຕາມິນຊີ, ທອງ ແລະ ໄຟເບີ ເຊິ່ງລ້ວນແຕ່ມີປະໂຫຍດຕໍ່ການຄວບຄຸມຄວາມດັນເລືອດຂອງຮ່າງກາຍ ລວມໄປເຖິງໃຜທີ່ມີອາການຖອກທ້ອງ ຫຼື ອາການລຳໄສ້ປັ່ນປ່ວນ ຢາກໃຫ້ລອງກິນກີວີ ຢ່າງໜ້ອຍມື້ລະ 2 ໝາກເປັນປະຈຳ ກໍຈະຊ່ວຍຫຼຸດອາການຖອກທ້ອງໄດ້ຢ່າງມີປະສິດທິພາບ;

8. ລະແຊັງແຫ້ງ: ເປັນໝາກໄມ້ທີ່ມີປະລິມານໂປແທດຊຽມຫຼາຍເຊັ່ນກັນ ໂດຍຂໍ້ມູນຈາກກົມວິຊາການກະສິກຳ ສະຫະລັດອາເມລິກາ ເປີດເຜີຍວ່າ ລະແຊັງອົບແຫ້ງເຄິ່ງຖ້ວຍ ມີໂປຕາດຊຽມຫຼາຍເຖິງ 356 ມິນລີກຼາມ ຖືວ່າເປັນໝາກໄມ້ທີ່ມີສັບພະຄຸນຊ່ວຍຫຼຸດຄວາມດັນເລືອດໄດ້ອີກຊະນິດໜຶ່ງ ແຕ່ກໍຄວນເລືອກກິນເມັດເກດທີ່ມີນ້ຳຕານໜ້ອຍ ຫຼື ຢ່າກິນຫຼາຍເກີນໄປ ເພາະເມັດເກດເປັນໝາກໄມ້ແປຮູບທີ່ມີປະລິມານນ້ຳຕານຄ້ອນຂ້າງຫຼາຍ ຖ້າຮັບປະທານຫຼາຍເກີນໄປອາດເຮັດໃຫ້ນ້ຳໜັກຂຶ້ນ, ອ້ວນຂຶ້ນ ແລ້ວສົ່ງຜົນໃຫ້ສ່ຽງຕໍ່ພະຍາດອື່ນໆອີກໄດ້.

ແນວໃດກໍຕາມ, ອາຫານທີ່ມີໂປແທດຊຽມຫຼາຍເຫຼົ່ານີ້ບໍ່ເໝາະກັບຜູ້ປ່ວຍທີ່ມີບັນຫາເລື່ອງໝາກໄຂ່ຫຼັງເຊັ່ນພະຍາດໝາກໄຂ່ຫຼັງຊຸດໂຊມເຮື້ອຮັງ ເພາະຜູ້ເປັນພະຍາດໝາກໄຂ່ຫຼັງມັກຈະມີຄວາມບົກພ່ອງໃນການກຳຈັດໂປແທດຊຽມ ອອກຈາກຮ່າງກາຍ ເຊິ່ງອາດເຮັດໃຫ້ເກີດພາວະໂຊດຽມຫຼາຍເກີນໄປ (Hyperkalemia)ທີ່ກໍ່ໃຫ້ເກີດອັນຕະລາຍຕໍ່ຮ່າງກາຍ ແລະ ລະບົບຫົວໃຈໄດ້; ດັ່ງນັ້ນ, ຖ້າຫາກຜູ້ເປັນພະຍາດໝາກໄຂ່ຫຼັງມີພາວະຄວາມດັນເລືອດສູງພ້ອມກັນ ຄວນປຶກສາແພດເລື່ອງການຮັບປະທານອາຫານທີ່ເໝາະສົມເພື່ອຄວາມປອດໄພ.

**ຂໍ້ມູນຈາກ:**
**www.losoboom.blogspot.com**

## ອາດ ກະວີລາວ

# ໃຜກໍຢາກໄດ້

**# ເກດແກ້ວ ປີກພົມ**

❊ ຢາກໄດ້ ເງິນແມ່ນຕ້ອງ — ສະແຫວງຊອກຫາວຫາ
ດ້ວຍເຫື່ອແຮງກາຍາ — ບວກສະຕິປັນຍາພ້ອມ
ບໍ່ແມ່ນມອງຊອມສິ້ງ — ຂະໂມຍຂອງເຂົາແລ່ນ
ຢ່າງເປີດແປນເກັ່ງກ້າ — ກົດໝາຍນັ້ນບໍ່ຍຳເກງ

❊ ເປັນນັກເລງລັກປຸ້ນ — ປີນຈໍ່ຈຳເອົາ
ເງິນຄຳເຂົາມາມີ — ແບບຄືໂຈນຮ້າຍ
ທຳລາຍກັນກຸມຂ້າ — ຫາລຸນຕີຕ່ອຍ
ໄດ້ມາພຽງເລັກໜ້ອຍ — ສັງຊີກຸ້ມຄ່າກະທຳ

❊ ຍາມຕຳຫລວດຈັບໄດ້ — ຍັດໃສ່ຄຸກຄຸມຂັງ
ອານາຄົດມືວໝອງ — ມືດມົນເມືອໜ້າ
ຫາກິນສຸດຈະລິດນັ້ນ — ລາຍວັນດີກວ່າ
ເປັນຄົນຊາມຊົ່ວຊ້າ — ອາຍໜ້າເສື່ອມສັກສີ

❊ ຢາກມັ່ງມີໝັ່ນສ້າງ — ສວນໄຮ່ທຳນາ
ສ້າງສາທຳການຜະລິດ — ສົ່ງຂາຍເປັນສິນຄ້າ
ເງິນຈະມີມາເຂົ້າ — ກະເປົາຕົນເຕັມຕຶ່ງ
ຄອບຄົວກໍຊາບຊຶ້ງ — ຊາວບ້ານຊື່ນຊົມ

❊ ເງິນໃຜກໍຢາກໄດ້ — ຈັບຈ່າຍປະຈຳວັນ
ສຳຄັນໃນຊີວິດ — ມາກມາຍຫລາຍເລື່ອງ
ແຕ່ຄວນຄຳນຶງເບື້ອງ — ການຫາມາຈ່າຍ
ບໍ່ສ້າງຄວາມລຳຄານເຮັດໃຫ້ ໃຜໆຕ້ອງເດືອດຮ້ອນ — ເມືອງບ້ານຈຶ່ງສະຫງົບ ຊອບແລ້ວ!



## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ເດືອນ**ສິງຫາຂອງແຕ່ລະປີມີເຫດການສຳຄັນທີ່ເປັນວັນປະຫວັດສາດຂອງຊາດຢ່າງຫຼວງຫຼາຍ ເຊັ່ນ: ວັນສື່ມວນຊົນ ແລະ ການພິມຈຳໜ່າຍ, ວັນລັດຖະທຳມະນູນ ແລະ ວັນຍຶດອຳນາດ ຫຼາຍພາກສ່ວນຄືກັນ ກຽມຮ່ວມໂຮມສະຫຼອງ ຈັດປາຖະກະຖາ ພໍ່ກົດຈະກຳພ້ອມ ພໍໃຫ້ຄົນຮຸ່ນຫຼັງຮູ້ ວັນສຳຄັນປະຫວັດສາດ ລະນຶກໄວ້ພ້ອມພ້ອມ ປະຫວັດສາດເພື່ອສືບສານ **ຊອບແລ້ວ!**

❊ **ຊົມ**ເຊີຍວັນສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ຄົບຮອບ **48 ປີ** (4 ສິງຫາ 1978-4 ສິງຫາ 2026) 4 ສິງຫາ ແມ່ນມື້ ກຳເນີດສະພາປະຊາຊົນແຂວງ ຮຽນຂໍເປັນຕົວແທນ ເຫຼົ່າປະຊາຊາວເຊື້ອ ຂໍໃຫ້ມີສຸກລົ້ນ ກາຍໃຈໂດຍດັ່ງ ທັງອຽກງານເດັ່ນກ້າວ ຈະເລີນຂຶ້ນລື່ນກວ່າຫຼັງ **ທ່ານເອີຍ!**

## ຊອບຍິ້ມ

**# ພົ້ງດຶ່ງ**

### ເລື່ອງ: ມືບໍ່ລະ

**ກ:** ມຶງສູບຢາຈັກປີແລ້ວ
**ຂ:** 20 ປີ
**ກ:** ຖ້າມຶງເອົາເງິນທີ່ມຶງໄປຊື້ຢາສູບ 20 ປີ ໄປຊື້ລົດໃຫຍ່ມາຂີ່ ກະຄືຊິໄດ້ລະເນາະ !
**ຂ:** ມຶງສູບຢາບໍ່?
**ກ:** ບໍ່... ກູບໍ່ໄດ້ສູບ
**ຂ:** ແລ້ວໃສລະລົດໃຫຍ່ມຶງ, ມຶງມີບໍ່?



## ສຸພາສິດ-ຄະຕິເຕືອນໃຈ

**# ດອກຫຍ້າ**

"ຫຼີກລີ້ງໃກ້ໄກສາມທອກ ຫຼີກອອກໃຫ້ໄກສາມວາ
ຫຼີກຄົນສາມານ ໃຫ້ໄກສາມໂຍດ"

ລັດຖະສະພາຕ່າງປະເທດ

# ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດຫວຽດນາມ ຈະພິຈາລະນາ 13 ບັນຫາສຳຄັນ




(VNA) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດຫວຽດນາມຊຸດທີ XVI ຈະພິຈາລະນາ 31 ບັນຫາ ລວມມີການອະນຸມັດຮ່າງກົດໝາຍ 15 ສະບັບ, ຮ່າງມະຕິ 4 ສະບັບ, 5 ບັນຫາສຳຄັນ ແລະ ການອ່ານຮ່າງກົດໝາຍເພີ່ມຕື່ມ 7 ສະບັບ ແລະ ດຳເນີນການທົບທວນຄືນຄັ້ງທຳອິດຂອງຮ່າງກົດໝາຍ 7 ສະບັບ, ພ້ອມກັບບັນຫາອື່ນໆທີ່ຢູ່ພາຍໃຕ້ສິດອຳນາດຂອງສະພາແຫ່ງຊາດ, ຕາມທີ່ໄດ້ມີການຖະແຫຼງຂ່າວເມື່ອວັນທີ 28 ກໍລະກົດ 2026.

ການຖະແຫຼງຂ່າວຄັ້ງນີ້ ຈັດຂຶ້ນໂດຍການຮ່ວມກັບລະຫວ່າງ ຄະນະກຳມະການຂໍ້ມູນຂ່າວສານ, ການສຶກສາ ແລະ ການລະດົມມວນຊົນ ສູນກາງພັກ, ຫ້ອງວ່າການສະພາແຫ່ງຊາດ, ກະຊວງວັດທະນະທຳ, ກິລາ ແລະ ການທ່ອງ ທ່ຽວ, ແລະ ສະມາຄົມນັກຂ່າວຫວຽດນາມ.

ນາງ ຮວ່າງ ທິ ລານ ຍຸງ (Hoang Thi Lan Nhung) ຫົວໜ້າກົມຂໍ້ມູນຂ່າວສານ ແລະ ຫໍສະໝຸດ ຂອງຫ້ອງວ່າການສະພາແຫ່ງຊາດ ກ່າວວ່າ: ກອງປະຊຸມດັ່ງກ່າວ ມີກຳນົດຈະເປີດໃນວັນທີ 3 ສິງຫາ ຫຼັງຈາກກອງປະຊຸມກະກຽມ ແລະ ສິ້ນສຸດໃນວັນທີ 24 ສິງຫາ, ໂດຍສຳຮອງວັນທີ 25 ສິງຫາໄວ້ ຫາກຈຳເປັນ; ໂດຍແບ່ງອອກສອງໄລຍະຄື: ວັນທີ 3-13 ສິງຫາ ແລະ ວັນທີ 19-24 ສິງຫາ, ລວມໄລຍະເວລາປະມານ 17 ວັນເຮັດວຽກ.

ນາງ ຍຸງ ຮຽກຮ້ອງໃຫ້ສື່ມວນຊົນຈັດຕັ້ງປະຕິບັດແຜນການສື່ສານສຳລັບກອງປະຊຸມຢ່າງມີປະສິດທິພາບ ໂດຍຂະຫຍາຍຂອບເຂດການລາຍງານຂ່າວໃຫ້ກວ້າງຂວາງ, ເສີມສ້າງການລາຍງານພິເສດ ແລະ ນຳໃຊ້ເວທີດິຈິຕອນໃຫ້ຫຼາຍຂຶ້ນ; ນາງຍັງຮຽກຮ້ອງໃຫ້ມີການລາຍງານຢ່າງເລິກເຊິ່ງກ່ຽວກັບກິດຈະກຳທາງດ້ານນິຕິບັນຍັດໃຫ້ຫຼາຍຂຶ້ນ, ແນວຄິດໃໝ່ໃນການອອກກົດໝາຍ ແລະ ການຕົກລົງບັນຫາສຳຄັນຂອງຊາດ, ພ້ອມທັງສະທ້ອນໃຫ້ເຫັນເຖິງຄວາມມຸ່ງມາດປາຖະໜາຂອງຜູ້ມີສິດເລືອກຕັ້ງຢ່າງວ່ອງໄວ.

ນາງກ່າວວ່າ ຄວາມພະຍາຍາມໃນການສື່ສານ ຄວນເນັ້ນໜັກເຖິງຄວາມສຳຄັນຂອງກອງປະຊຸມສະໄໝວິສາມັນເຊິ່ງສະແດງໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງພັກ, ສະພາແຫ່ງຊາດ ແລະ ລັດຖະບານ ໃນການຈັດຕັ້ງປະຕິບັດແນວທາງ ແລະ ບົດສະຫຼຸບຂອງຄະນະບໍລິຫານງານສູນກາງພັກຢ່າງວ່ອງໄວ, ແກ້ໄຂບັນຫາຮີບດ່ວນ, ກຳຈັດສິ່ງກີດຂວາງ ແລະ ຫຼຸດຜ່ອນພາລະວຽກງານຂອງກອງປະຊຸມສະໄໝສາມັນປະຈຳປີໃນທ້າຍປີ.

ໃນບັນດາຮ່າງກົດໝາຍທີ່ໄດ້ຮັບຄວາມສົນໃຈຈາກສາທາລະນະຊົນຢ່າງຫຼວງຫຼາຍ, ກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງ ຈະຖືກນຳມາອະພິປາຍໃນກອງປະຊຸມສະໄໝວິສາມັນຄັ້ງນີ້ກ່ອນທີ່ຈະພິຈາລະນາຕື່ມອີກເພື່ອຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ໃນເດືອນຕຸລາ, ປະມວນກົດໝາຍອາຍາສະບັບປັບປຸງ ກໍຈະໄດ້ຮັບຟັງຄວາມຄິດເຫັນໃນຮອບທຳອິດເຊັ່ນກັນ.

ຫງວຽນ ວັນ ຫຽນ (Nguyen Van Hien) ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ກ່າວວ່າ: ກອງປະຊຸມຄັ້ງນີ້ ເກີດຂຶ້ນໃນຂະນະທີ່ສະພານິຕິບັນຍັດກຳລັງປະເຊີນກັບພາລະວຽກງານດ້ານນິຕິບັນຍັດທີ່ບໍ່ເຄີຍມີມາກ່ອນ ແລະ ຄວາມຕ້ອງການອັນຮີບດ່ວນໃນການເລັ່ງການປະຕິຮູບສະຖາບັນ. ເຂົາກ່າວວ່າ ລັດຖະບານ ແລະ ອົງການຂັ້ນສູນກາງ ຄາດວ່າຈະສະເໜີຮ່າງກົດໝາຍເກືອບ 90 ສະບັບພາຍໃນທ້າຍປີນີ້; ດ້ວຍເຫດຜົນນີ້, ສະພາແຫ່ງຊາດ ຈຶ່ງໄດ້ຂໍການອະນຸມັດຈາກອົງການທີ່ກ່ຽວຂ້ອງເພື່ອຈັດກອງປະຊຸມສະໄໝວິສາມັນໂດຍມີກົດໝາຍເປັນວາລະຕົ້ນຕໍ.




# ບຣາຊິນ ປະກາດໃຊ້ກົດໝາຍຫ້າມ foie gras

(Reuters) - ວັນທີ 23 ກໍລະກົດ 2026, ປະທານາທິບໍດີບຣາຊິນ ລຸຍຊ໌ ອີນາຊີໂອ ລູລາ ດາ ຊິວວາ (Luiz Inacio Lula da Silva) ໄດ້ລົງນາມໃຫ້ກົດໝາຍຫ້າມຜະລິດແລະຈຳໜ່າຍຟົວກຣາ (foie gras - ຜະລິດຕະພັນອາຫານພິເສດທີ່ເຮັດຈາກຕັບເປັດ ຫຼື ຫ່ານ) ໃນບຣາຊິນ ມີຜົນບັງຄັບໃຊ້ຢ່າງເປັນທາງການ, ໂດຍໃຫ້ເຫດຜົນວ່າຂະບວນການຜະລິດ ເປັນການທາລຸນສັດ.

ບຣາຊິນ ເປັນປະເທດທຳອິດໃນພາກພື້ນອາເມລິກາລາຕິນ ທີ່ອອກກົດໝາຍຫ້າມທັງການຜະລິດ ແລະ ຈຳໜ່າຍ foie gras, ຂະນະທີ່ທົ່ວໂລກມີຢ່າງໜ້ອຍ 20 ປະເທດ ຫ້າມການຜະລິດ foie gras ໂດຍອິນເດຍ ແລະ ຈີນ ຫ້າມນຳເຂົ້າ ເດັດຂາດເຖິງວ່າຈີນຍັງຄົງມີອຸດສາຫະກຳຜະລິດ foie gras ຂະໜາດໃຫຍ່; ລາຍງານລະບຸວ່າ ການຜະລິດ foie gras ໃນບຣາຊິນ ມີປະລິມານໜ້ອຍຢູ່ແລ້ວ ແລະ ການຫ້າມຈຳໜ່າຍ ຈະສົ່ງຜົນໃຫ້ການນຳເຂົ້າ foie gras ຈາກຝຣັ່ງສິ້ນສຸດລົງຢ່າງສິ້ນເຊີງ.

ກ່ອນໜ້ານີ້, ລັດຖະສະພາບຣາຊິນ ຜ່ານຮ່າງກົດໝາຍສະບັບນີ້ເມື່ອເດືອນເມສາທີ່ຜ່ານມາ; ນັກການທູດຝຣັ່ງເພີ່ມຄວາມກົດດັນຕໍ່ ລູລາ ໃຫ້ໃຊ້ສິດຄັດຄ້ານຮ່າງກົດໝາຍດັ່ງກ່າວ, ໂດຍໂຕ້ຖຽງວ່າຂະບວນການຜະລິດ foie gras ຂອງຝຣັ່ງ ບໍ່ໄດ້ກ່ຽວຂ້ອງກັບການທາລຸນສັດ ແລະ ເປັນປະເດັນທາງວັດທະນະທຳ (ອີງຕາມນັກການທູດບຣາຊິນຜູ້ທີ່ກ່າວໂດຍບໍ່ປະສົງອອກນາມ).

ສະມາຄົມຜູ້ຜະລິດ foie gras ຂອງຝຣັ່ງລະບຸວ່າ ກົດໝາຍດັ່ງກ່າວອາດຈະລະເມີດຂໍ້ຕົກລົງການຄ້າເສລີລະຫວ່າງສະຫະພາບເອີຣົບ ກັບ ກຸ່ມເມຣໂຄຊູຣ໌ (Mercosur ຫຼື ຕະຫຼາດຮ່ວມອາເມລິກາໃຕ້ ເປັນກຸ່ມເສດຖະກິດ ແລະ ການເມືອງໃນອາເມລິກາໃຕ້ປະກອບດ້ວຍ: ອາກຊັງຕິນ, ໂບລິວີ, ບຣາຊິນ, ປຣາກວາຍ ແລະ ອູຣູກວາຍ), ຂະນະທີ່ນັກເຄື່ອນໄຫວດ້ານສິດທິສັດຂອງບຣາຊິນຢືນຢັນວ່າ ການຜະລິດ foie gras ບໍ່ອາດຖືເປັນການຄຳນຶງເຖິງສະຫວັດດີການສັດໄດ້, ເຖິງແມ່ນມີການອ້າງວ່າປະຕິບັດຕໍ່ສັດຢ່າງເໝາະສົມກໍຕາມ.



# ລັດຖະສະພາອິນໂດເນເຊຍ ຜ່ານຮ່າງກົດໝາຍສ້າງຕັ້ງສູນການເງິນສາກົນ



(Xinhua) - ວັນອັງຄານທີ 21 ກໍລະກົດ 2026, ສະພາຜູ້ແທນປະຊາຊົນອິນໂດເນເຊຍ ໄດ້ຜ່ານຮ່າງກົດໝາຍເພື່ອສ້າງຕັ້ງສູນການເງິນສາກົນແຫ່ງອິນໂດເນເຊຍ, ໂດຍມີຈຸດປະສົງເພື່ອດຶງດູດການລົງທຶນຈາກຕ່າງປະເທດໃນໄລຍະຍາວ ແລະ ຊຸກຍູ້ການເຕີບໂຕທາງເສດຖະກິດຂອງປະເທດ.

ໂມຮາໝັດ ເຮກັລ (Mohamad Hekal) ຮອງຫົວໜ້າຄະນະກຳມະການການເງິນຂອງລັດຖະສະພາ ກ່າວວ່າ ກົດໝາຍສະບັບໃໝ່ນີ້ ແນໃສ່ກຸ່ມສະຖາບັນການເງິນຍັກໃຫຍ່ທົ່ວໂລກ ໂດຍສຸມໃສ່ທຸລະກິດທະນາຄານເພື່ອການລົງທຶນ, ການຄຸ້ມຄອງຊັບສິນ ລວມທັງທຸລະກິດການເຊົ່າເຮືອບິນແລະເຮືອ.

ສື່ມວນຊົນທ້ອງຖິ່ນລາຍງານວ່າ ສູນແຫ່ງນີ້ ຖືກອອກແບບມາເພື່ອສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດໃນໄລຍະຍາວ ແລະ ຫຼຸດຄວາມສ່ຽງຂອງປະເທດ ຕໍ່ການໄຫຼອອກຂອງທຶນຢ່າງກະທັນຫັນ.

ກ່ອນໜ້ານີ້, ປູຣ໌ບາຢາ ຢູດີ ຊາເດວາ (Purbaya Yudhi Sadewa) ລັດຖະມົນຕີກະຊວງການເງິນ ກ່າວວ່າ ອິນໂດເນເຊຍ ຕ້ອງການຂະແໜງການເງິນທີ່ເລິກເຊິ່ງ, ມີນະວັດຕະກຳ, ມີປະສິດທິພາບ ແລະ ການເງິນທີ່ປະສົມປະສານໃນລະດັບສາກົນຫຼາຍຂຶ້ນ ເພື່ອຮັບມືກັບສະພາບເສດຖະກິດໂລກທີ່ຊັບຊ້ອນຂຶ້ນເລື້ອຍໆ.

# ລັດຖະສະພາຝຣັ່ງ ຜ່ານຮ່າງກົດໝາຍ ຫ້າມເດັກອາຍຸຕ່ຳກວ່າ 15 ປີໃຊ້ສື່ສັງຄົມ



(Xinhua) - ວັນທີ 21 ກໍລະກົດ 2026, ລັດຖະສະພາຝຣັ່ງ ໄດ້ຜ່ານຮ່າງກົດໝາຍເພື່ອປົກປ້ອງເດັກ ແລະ ເຍົາວະຊົນ ຈາກຄວາມສ່ຽງທີ່ກ່ຽວຂ້ອງກັບການໃຊ້ສື່ສັງຄົມອອນລາຍ; ຮ່າງກົດໝາຍນີ້ມີຈຸດປະສົງເພື່ອຫ້າມເດັກອາຍຸຕ່ຳກວ່າ 15 ປີ ເຂົ້າເຖິງສື່ສັງຄົມອອນລາຍ ແລະ ປົກປ້ອງພວກເຂົາຈາກເນື້ອຫາທີ່ກໍ່ໃຫ້ເກີດຄວາມກັງວົນ ຫຼື ເປັນອັນຕະລາຍ, ໂດຍບັນດາບົດບັນຍັດທີ່ກ່ຽວຂ້ອງ ຈະມີຜົນບັງຄັບໃຊ້ໃນວັນທີ 1 ກັນຍາປີນີ້.

ບໍລິການສື່ສັງຄົມອອນລາຍທີ່ຢູ່ພາຍໃຕ້ກົດໝາຍນີ້ ໄດ້ແກ່ Instagram, TikTok, Facebook ແລະ Snapchat ລວມທັງການບໍລິການທີ່ອະນຸຍາດໃຫ້ຜູ້ໃຊ້ມີການໂຕ້ຕອບ, ເຜີຍແຜ່ເນື້ອຫາຕໍ່ສາທາລະນະ ຫຼື ເຂົ້າຮ່ວມໃນຊຸມຊົນຜູ້ໃຊ້; ສາລານຸກົມອອນລາຍ ເຊັ່ນ Wikipedia ແລະ ຖານຂໍ້ມູນທາງການສຶກສາ ຫຼື ວິທະຍາສາດ ແມ່ນຖືກຍົກເວັ້ນຈາກຂອບເຂດຂອງກົດໝາຍສະບັບນີ້.

"ສື່ສັງຄົມອອນລາຍ ຈະຖືກຫ້າມໃຊ້ສຳລັບເດັກອາຍຸຕ່ຳກວ່າ 15 ປີ ນັບແຕ່ເລີ່ມຕົ້ນສົກຮຽນໃໝ່; ຂະນະນີ້, ຂຶ້ນກັບສະພາລັດຖະທຳມະນູນຈະເປັນຜູ້ຕັດສິນ ກ່ອນທີ່ພວກເຮົາຈະກ້າວໄປສູ່ການຈັດຕັ້ງປະຕິບັດເພື່ອເຮັດໃຫ້ມາດຕະການນີ້ເປັນຈິງ ແລະ ປົກປ້ອງເດັກຂອງພວກເຮົາໃນໂລກອອນລາຍ" ປະທານາທິບໍດີ ເອັມມານູເອວ ມາຄຣົງ ກ່າວຜ່ານ X.

ຜົນການສຶກສາທີ່ເຜີຍແຜ່ໂດຍອົງການສາທາລະນະສຸກຝຣັ່ງ ໃນປີ 2025 ສະແດງໃຫ້ເຫັນວ່າໃນປີ 2022, ເດັກອາຍຸ 3-5 ປີ ໃນຝຣັ່ງແຜ່ນດິນໃຫຍ່ ໃຊ້ເວລາສະເລ່ຍ 1 ຊົ່ວໂມງ 22 ນາທີຕໍ່ວັນ ຢູ່ຕໍ່ໜ້າຈໍ; ຕົວເລກນີ້ ເພີ່ມຂຶ້ນເປັນ 1 ຊົ່ວໂມງ 53 ນາທີ ສຳລັບເດັກອາຍຸ 6-8 ປີ ແລະ 2 ຊົ່ວໂມງ 33 ນາທີ ສຳລັບເດັກອາຍຸ 9-11 ປີ.

# Czech ອະນຸມັດຮ່າງກົດໝາຍ ຫ້າມໃຊ້ໂທລະສັບໃນໂຮງຮຽນ




(Xinhua) - ວັນຈັນທີ 20 ກໍລະກົດ 2026, ລັດຖະບານແຫ່ງສາທາລະນະລັດເຊັກ ໄດ້ອະນຸມັດຮ່າງກົດໝາຍຫ້າມໃຊ້ໂທລະສັບມືຖື ແລະ ອຸປະກອນສື່ສານອີເລັກໂຕຣນິກອື່ນໆ ໃນໂຮງຮຽນ. ຂໍ້ສະເໜີດັ່ງກ່າວ ໄດ້ຮັບການສະໜັບສະໜູນຢ່າງເອກະສັນຈາກຄະນະລັດຖະມົນຕີ; ຫາກໄດ້ຮັບການອະນຸມັດຈາກລັດຖະສະພາ, ຈະມີຜົນບັງຄັບໃຊ້ໃນວັນທີ1ກັນຍາ2027.

ພາຍໃຕ້ຮ່າງກົດໝາຍນີ້, ການຫ້າມຈະກວມເອົາເດັກໃນໂຮງຮຽນອະນຸບານ, ປະຖົມ, ມັດທະຍົມຕອນຕົ້ນ ແລະ ໂຮງຮຽນດົນຕີ ລວມທັງໃນຫ້ອງຮຽນ, ເວລາພັກຜ່ອນ, ໂຮງອາຫານ, ສູນລ້ຽງເດັກຫຼັງເລີກຮຽນ ແລະ ສະໂມສອນຕ່າງໆໃນໂຮງຮຽນ.

ລັດຖະບານກ່າວວ່າ ມາດຕະການດັ່ງກ່າວ ມີຈຸດປະສົງເພື່ອປັບປຸງສະມາທິ, ຜົນການຮຽນ ແລະ ສະພາບແວດລ້ອມໂດຍລວມຂອງໂຮງຮຽນ ໂດຍອີງໃສ່ປະສົບການທີ່ດີຈາກປະເທດຕ່າງໆ ເຊັ່ນ: ຝຣັ່ງ ແລະ ໂຮນລັງ.

ພັກຝ່າຍຄ້ານກ່າວວ່າ ການຫ້າມໃຊ້ໂທລະສັບ ຈະທຳລາຍທັກສະຄວາມຮູ້ດ້ານດິຈິຕອນຂອງເດັກ.

# ຍີ່ປຸ່ນ ຜ່ານກົດໝາຍສ້າງຕັ້ງ "ນະຄອນຫຼວງສຳຮອງ" ຫາກເກີດໄພພິບັດຮ້າຍແຮງໃນໂຕກຽວ



(Nikkei) - ລັດຖະສະພາຍີ່ປຸ່ນ ລົງມະຕິເຫັນດີກົດໝາຍສ້າງຕັ້ງ "ນະຄອນຫຼວງສຳຮອງ" ເປີດທາງຄັດເລືອກແຂວງທີ່ມີທ່າແຮງເປັນສູນກາງບໍລິຫານປະເທດໃນສະຖານະການສຸກເສີນ ຫາກນະຄອນຫຼວງໂຕກຽວປະສົບໄພພິບັດຮ້າຍແຮງ.

ວັນທີ 24 ກໍລະກົດ 2026, ສະພາສູງ ໄດ້ອະນຸມັດກົດໝາຍສ້າງຕັ້ງ "ນະຄອນຫຼວງສຳຮອງ" ເພື່ອຮັບປະກັນວ່າລັດຖະບານຍັງສາມາດສືບຕໍ່ບໍລິຫານປະເທດໄດ້ ຫາກນະຄອນຫຼວງໂຕກຽວໄດ້ຮັບຜົນກະທົບຈາກໄພພິບັດຮ້າຍແຮງ ຈົນບໍ່ສາມາດໃຊ້ບໍລິຫານລາຊະການໄດ້.

ກົດໝາຍດັ່ງກ່າວ ເຊິ່ງໄດ້ຮັບການອະນຸມັດຈາກສະພາຜູ້ແທນລາດສະດອນແລ້ວ ໄດ້ກຳນົດໃຫ້ມີການຄັດເລືອກແຂວງໜຶ່ງ ເພື່ອປະຕິບັດໜ້າທີ່ເປັນສູນກາງການບໍລິຫານຂອງລັດຖະບານແທນນະຄອນຫຼວງໂຕກຽວ ໃນກໍລະນີສຸກເສີນ; ແຂວງທີ່ຖືກຄັດເລືອກ ຈະໄດ້ຮັບການພິຈາລະນາຈາກປັດໄຈຫຼາຍດ້ານ ເຊັ່ນ: ຈຳນວນປະຊາກອນ, ຂະໜາດເສດຖະກິດແລະຕ້ອງສ້າງຕັ້ງເຂດບໍລິຫານພິເສດທີ່ຄ້າຍຄືກັບ23ເຂດພິເສດຂອງນະຄອນຫຼວງໂຕກຽວ.

ນອກຈາກນີ້, ກຳມາທິການພິເສດຂອງສະພາສູງ ຍັງອະນຸມັດມະຕິປະກອບການບັງຄັບໃຊ້ກົດໝາຍ ໂດຍຮຽກຮ້ອງໃຫ້ລັດຖະບານດຳເນີນມາດຕະການຢ່າງຮອບຄອບ ເພື່ອປ້ອງກັນບໍ່ໃຫ້ການເລືອກຕັ້ງທ້ອງຖິ່ນທັບຊ້ອນກັບການລົງປະຊາມະຕິກ່ຽວກັບການສ້າງຕັ້ງເຂດບໍລິຫານພິເສດໃນພື້ນທີ່ທີ່ໄດ້ຮັບການຄັດເລືອກ.

# ກົດໝາຍຫ້າມສູບຢາຢູ່ສະຖານທີ່ກໍ່ສ້າງ ມີຜົນບັງຄັບໃຊ້ໃນຮົງກົງ



(Xinhua) - ລະບຽບວ່າດ້ວຍສະຖານທີ່ກໍ່ສ້າງ (ຄວາມປອດໄພ)ສະບັບປັບປຸງປີ2026 ມີຜົນບັງຄັບໃຊ້ແລ້ວ ຫຼັງຈາກປະກາດໃນຈົດໝາຍເຫດທາງລັດຖະການ ເມື່ອວັນສຸກທີ 17 ກໍລະກົດ 2026, ຕາມຂ່າວປະຊາສຳພັນທີ່ເຜີຍແຜ່ໂດຍລັດຖະບານເຂດບໍລິຫານພິເສດຮົງກົງ (Hong Kong Special Administrative Region - HKSAR), ສປຈີນ; ນອກຈາກນີ້, ລະບຽບວ່າດ້ວຍການສູບຢາສູບ (ສາທາລະນະສຸກ) ສະບັບປັບປຸງຕາຕະລາງ 2 ປີ 2026 ແລະ ປະກາດວ່າດ້ວຍການລົງໂທດຄົງທີ່(ການກະທຳຜິດກ່ຽວກັບການສູບຢາສູບ) (ການລະບຸລາຍລະອຽດກ່ຽວກັບອົງການ ແລະເຈົ້າໜ້າທີ່ຂອງລັດ)ສະບັບປັບປຸງປີ 2026 ເຊິ່ງໄດ້ເຜີຍແຜ່ໃນຈົດໝາຍເຫດທາງລັດຖະການ ເມື່ອວັນທີ 22 ພຶດສະພາ ກໍມີຜົນບັງຄັບໃຊ້ໃນວັນສຸກເຊັ່ນກັນ.

ການປັບປຸງກົດໝາຍທັງສາມສະບັບ ໄດ້ກຳນົດພັນທະທາງກົດໝາຍທີ່ຊັດເຈນສຳລັບຜູ້ຮັບເໝົາລາຍໃຫຍ່ແລະຜູ້ຮັບເໝົາຍ່ອຍ ໃນສະຖານທີ່ກໍ່ສ້າງ ແລະ ບຸກຄົນໃດກໍຕາມທີ່ຢູ່ໃນສະຖານທີ່ກໍ່ສ້າງເພື່ອຫ້າມການສູບຢາສູບຢູ່ສະຖານທີ່ກໍ່ສ້າງທຸກແຫ່ງ ເພື່ອຫຼຸດຄວາມສ່ຽງຈາກອັກຄີໄພ ແລະ ຮັກສາຄວາມປອດໄພຂອງກຳມະກອນ ແລະ ປະຊາຊົນ.

ພາຍໃຕ້ກົດໝາຍເຫຼົ່ານີ້, ເຈົ້າໜ້າທີ່ຄວາມປອດໄພໃນອາຊີບ (Occupational Safety Officers - OSOs), ກະຊວງແຮງງານຂອງລັດຖະບານ HKSAR ມີສິດອຳນາດໃນການບັງຄັບໃຊ້ກົດໝາຍທີ່ກ່ຽວຂ້ອງກັບການສູບຢາສູບຢູ່ສະຖານທີ່ກໍ່ສ້າງທຸກປະເພດ; OSOs ຈະອອກໃບແຈ້ງຄ່າປັບໃໝທັນທີ ໂດຍບໍ່ຕ້ອງແຈ້ງເຕືອນໃຫ້ຊາບລ່ວງໜ້າແກ່ຜູ້ໃດກໍຕາມທີ່ສູບຢາສູບຢູ່ສະຖານທີ່ກໍ່ສ້າງ, ຜູ້ກະທຳຜິດຈະຕ້ອງເສຍຄ່າປັບໃໝເປັນຈຳນວນເງິນ 3,000 ໂດລາຮົງກົງ (ປະມານ 382.63 ໂດລາສະຫະລັດ).

ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຍ່ອຍ ໃນສະຖານທີ່ກໍ່ສ້າງ ຍັງຈະຕ້ອງດຳເນີນການທຸກວິທີທີ່ເໝາະສົມ ເພື່ອຮັບປະກັນວ່າບໍ່ມີບຸກຄົນໃດສູບຢາສູບ ຫຼື ຖືຜະລິດຕະພັນສູບຢາສູບທີ່ຈູດໄຟແລ້ວ ໃນສະຖານທີ່ກໍ່ສ້າງ; ຜູ້ກະທຳຜິດຈະຕ້ອງເສຍຄ່າປັບໃໝສູງສຸດ 400,000 ໂດລາຮົງກົງ (ປະມານ 51,016.84 ໂດລາສະຫະລັດ).

ໃນຂະນະດຽວກັນ, ກະຊວງແຮງງານຈະອອກລະບຽບປະຕິບັດ(codes of practices- CoPs) ວ່າດ້ວຍຫຼັກຮ້ານ (scaffolding ໂຄງຮ່າງທີ່ຕັ້ງຂຶ້ນສຳລັບການປຸກຕຶກ) ສະບັບປັບປຸງ ໃນໄວໆນີ້, ລວມທັງການກຳນົດຄວາມຕ້ອງການດ້ານວັດສະດຸສຳລັບແຜ່ນກັນຕົກຂອງຫຼັກຮ້ານ ເພື່ອຮັບປະກັນວ່າວັດສະດຸທີ່ໃຊ້ມີຄວາມແຂງແຮງພຽງພໍທີ່ຈະປ້ອງກັນບໍ່ໃຫ້ກຳມະກອນ ແລະ ສິ່ງຂອງ ຕົກຈາກຫຼັກຮ້ານ ພ້ອມທັງຫຼຸດຜ່ອນຄວາມສ່ຽງຈາກອັກຄີໄພ; ນອກຈາກນັ້ນ, CoPs ຈະລະບຸຂໍ້ກຳນົດສຳລັບແຜ່ນກັ້ນປ້ອງກັນຕາມລະບຽບການທີ່ກ່ຽວຂ້ອງ ເພື່ອຮັບປະກັນວ່າວັດສະດຸປ້ອງກັນນັ້ນ ກົງຕາມມາດຕະຖານການໜ່ວງໄຟທີ່ກຳນົດໄວ້.




## ກອງປະຊຸມໂຕະມົນ...

(ຕໍ່ຈາກໜ້າ 1)

ໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ນາງ ຮັນ ຈອງແອ ສະມາຊິກສະພາແຫ່ງຊາດ ແຫ່ງ ສ.ເກົາຫຼີ, ປະທານສະພາທີ່ປຶກສາກ່ຽວກັບບັນຫານ້ຳຂອງລັດຖະສະພາອາຊີ ໂດຍມີສະມາຊິກລັດຖະສະພາຈາກປະເທດສະມາຊິກ AAWC 10 ປະເທດ ແລະ 5 ປະເທດສັງເກດການ ພ້ອມດ້ວຍແຂກຂອງປະເທດເຈົ້າພາບ, ບັນດາທ່ານຮອງລັດຖະມົນຕີຈາກກະຊວງທີ່ກ່ຽວຂ້ອງຂອງ ສປປລາວ, ທູຕານຸທູດຂອງປະເທດສະມາຊິກ AAWC ທີ່ປະຈຳຢູ່ ສປປ ລາວ, ພາກສ່ວນຈາກສະຖາບັນ ແລະ ພາກທຸລະກິດຂອງ ສປປ ລາວ ແລະ ສ.ເກົາຫຼີ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 200 ທ່ານ.

ໃນພິທີເປີດກອງປະຊຸມຢ່າງເປັນທາງການ, ທ່ານ ນາງ ຮັນ ຈອງແອ ໄດ້ກ່າວຄຳເຫັນສະແດງຄວາມຂອບໃຈຕໍ່ສະພາແຫ່ງຊາດ ກໍຄື ສປປລາວ ທີ່ໃຫ້ກຽດຮັບເປັນເຈົ້າພາບຈັດກອງປະຊຸມຄັ້ງນີ້, ພ້ອມທັງຍົກໃຫ້ເຫັນຈຸດປະສົງ ແລະ ຄວາມເປັນມາຂອງອົງການດັ່ງກ່າວ. ໂອກາດດຽວກັນນີ້, ທ່ານ ວິໄລວົງ ບຸດດາຄຳ ກໍມີຄຳເຫັນຕໍ່ພິທີເປີດ ໂດຍໄດ້ຕີລາຄາສູງຕໍ່ບົດບາດຂອງAAWCທີ່ໃຫ້ຄວາມສຳຄັນໃນການສົ່ງເສີມການຮ່ວມມືລະຫວ່າງບັນດາສະມາຊິກລັດຖະສະພາ, ພາກສ່ວນລັດຖະບານ, ຊ່ຽວຊານຈາກສະຖາບັນຕ່າງໆໃນພາກພື້ນອາຊີ, ລວມທັງພາກສ່ວນທຸລະກິດເອກະຊົນ ໃນການແລກປ່ຽນບົດຮຽນດ້ານການກຳນົດນິຕິກຳ, ການອອກກົດໝາຍ, ການວາງນະໂຍບາຍ ແລະ ການຈັດຕັ້ງປະຕິບັດທີ່ດີ ກ່ຽວກັບການຄຸ້ມຄອງ, ບໍລິຫານຈັດການນ້ຳໃຫ້ມີຄວາມຍືນຍົງແລະການຮັບມືກັບການປ່ຽນແປງດິນຟ້າອາກາດ ໃນພາກພື້ນຂອງພວກເຮົາ ໃຫ້ມີປະສິດທິຜົນສູງກວ່າເກົ່າ; ພ້ອມດຽວກັນນີ້, ທ່ານ ຮອງປະທານສະພາແຫ່ງຊາດຍັງຍົກໃຫ້ເຫັນເຖິງຄວາມອຸດົມສົມບູນຂອງຊັບພະຍາກອນນ້ຳແລະຂອບເນື້ອໃນຂອງວິໄສທັດຮອດປີ2040ແລະຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ທີ່ກຳນົດກ່ຽວກັບການບໍລິຫານ ແລະ ນຳໃຊ້ນ້ຳແບບຍືນຍົງ, ການສົ່ງເສີມການນຳໃຊ້ພະລັງງານສະອາດ ແລະ ສົ່ງເສີມການນຳໃຊ້ພະລັງງານນ້ຳຂອງ ສປປລາວ. ນອກຈາກນັ້ນ, ຍັງຍົກໃຫ້ເຫັນຄວາມສຳຄັນຂອງການຕິດຕາມກວດກາການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນະໂຍບາຍແຫ່ງຊາດເພື່ອຮັບປະກັນການນຳໃຊ້ນ້ຳເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີປະສິດທິພາບ, ປະສິດທິຜົນ, ທົ່ວເຖິງ, ເທົ່າທຽມ ແລະ ຍືນຍົງ.

ໃນຕອນທ້າຍ, ທ່ານ ຮອງປະທານສະພາແຫ່ງຊາດລາວ ໄດ້ຮຽກຮ້ອງໃຫ້ບັນດາທ່ານສະມາຊິກ AAWC ສືບຕໍ່ເພີ່ມທະວີການຮ່ວມມືຊ່ວຍເຫຼືອເຊິ່ງກັນແລະກັນ ເພື່ອຮັບປະກັນການບໍລິຫານ, ຈັດການ ແລະ ການນຳໃຊ້ນ້ຳ ໃຫ້ມີຄວາມໝັ້ນຄົງ, ປອດໄພ ແລະ ຍືນຍົງ; ຍົກສູງປະສິດທິພາບຂອງການຄຸ້ມຄອງ ແລະ ນຳໃຊ້ນ້ຳ ທີ່ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ; ສົ່ງເສີມການນຳໃຊ້ນ້ຳເຂົ້າໃນທຸກຂົງເຂດວຽກງານ; ສ້າງກິດຈະກຳ ແລະ ໂຄງການແລກປ່ຽນທາງດ້ານເຕັກໂນໂລຊີທີ່ກ່ຽວຂ້ອງກັບການນຳໃຊ້, ການບຳບັດ ແລະ ການນຳນ້ຳກັບມາໃຊ້ໃໝ່; ເລັ່ງລັດການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ທີ 6 (SDG6 ມີນ້ຳສະອາດແລະສຸຂະອະນາໄມ) ໂດຍການສະໜັບສະໜູນທາງດ້ານທຶນຮອນໃຫ້ແກ່ປະເທດດ້ອຍພັດທະນາ ແລະ ກຳລັງພັດທະນາ ເພື່ອຄວາມຈະເລີນຮຸ່ງເຮືອງຮ່ວມກັນຂອງພວກເຮົາ.




*#ບ່າວກະບື*

**ແພງດາວ:** “ນ້ອງກໍ່ພໍຊິເປັນດາລານັກສະແດງໄດ້ຢູ່ບໍ່?”
**ສີເລີດ:** “ເປັນຫຍັງຊິບໍ່ໄດ້?”
**ແພງດາວ:** “ເຮັດຈັ່ງໃດລະ?”
**ສີເລີດ:** “ກໍ່ຊອກແຕ່ງດອງກັບອຳນວຍການສ້າງຮູບເງົາລະບໍ່”

***#BAOKBU***

PHENGDAO: “Can I become an actress?”
SICHERD: “Why not?onler”
PHENGDAO: “How?”
SICHERD: “Get married with a film director”

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 22 ກໍລະກົດ 2026, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ໂພໄຊ ໄຂຄຳພິທູນ ປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມທາງໄກຂອງຄະນະປະສານງານໄອປາ ຄັ້ງທີ 17 (The 17th AIPA CAUCUS) ພາຍໃຕ້ການເປັນປະທານຂອງທ່ານ ຊະຍາຣຸລ ໄອດີ ມາອາຊັດ (Syahrul Aidi Maazat) ປະທານກຳມາທິການລັດຖະສະພາສາກົນ, ສະພາຜູ້ແທນປະຊາຊົນແຫ່ງ ສາທາລະນະລັດອິນໂດເນເຊຍ ພ້ອມດ້ວຍທ່ານ ເຊມ ວິທະຍາ (Chem Widhya) ເລຂາທິການໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ແລະ ທ່ານ ນາງ ປວນ ມະຫາຣານີ(Puan Maharani) ປະທານສະພາຜູ້ແທນປະຊາຊົນອິນໂດເນເຊຍ; ໂດຍມີຄະນະຜູ້ແທນຈາກ 9 ປະເທດສະມາຊິກໄອປາ, ຕີມໍ ເລັດສະເຕ ໃນຖານະແຂກຂອງປະເທດເຈົ້າພາບ, 5ປະເທດສັງເກດການ: ສປຈີນ, ບາເຣນ, ອິນເດຍ, ອາແຊກໄບຊານ, ປາກິດສະຖານ ແລະ ພາກສ່ວນຈາກອົງການຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ51ທ່ານ.

ກອງປະຊຸມຄັ້ງນີ້, ໄດ້ນຳສະເໜີບົດລາຍງານແຫ່ງຊາດຂອງບັນດາປະເທດສະມາຊິກໄອປາ ກ່ຽວກັບ “ບົດບາດຂອງລັດຖະສະພາໃນການເສີມສ້າງຄວາມເປັນແກນກາງຂອງອາຊຽນ ໃນການນຳພາຜ່ານສິ່ງທ້າທາຍລະດັບໂລກທີ່ຊັບຊ້ອນ” ແລະ ໄດ້ມີການແລກປ່ຽນປະກອບຄຳຄິດເຫັນ ແລະ ປຶກສາຫາລືພາຍໃຕ້ຫົວຂໍ້: ການສົ່ງເສີມການປົກຄອງເພື່ອສັນຕິພາບທີ່ກວມລວມທຸກພາກສ່ວນ ແລະ ການຕອບສະໜອງຂອງອາຊຽນ ຕໍ່ການປ່ຽນແປງດິນຟ້າອາກາດ. ທ່ານ ໂພໄຊ ໄຂຄຳພິທູນ ໃນນາມຫົວໜ້າຄະນະຜູ້ແທນລາວ ໄດ້ສະແດງຄວາມຊົມເຊີຍຕໍ່ສະພາຜູ້ແທນປະຊາຊົນອິນໂດເນເຊຍ ໃນການເປັນເຈົ້າພາບກອງປະຊຸມຄັ້ງນີ້ແລະເນັ້ນເຖິງບົດບາດອັນສຳຄັນຂອງການທູດລັດຖະສະພາ ໃນການສົ່ງເສີມຄວາມເຂົ້າໃຈເຊິ່ງກັນແລະກັນ ຜ່ານການສົນທະນາດ້ານລັດຖະສະພາທີ່ສ້າງສັນ, ການຊຸກຍູ້ການຮ່ວມມືທີ່ເປັນຮູບປະທຳ ແລະ ການຮ່ວມມືທີ່ໃກ້ຊິດຍິ່ງຂຶ້ນລະຫວ່າງສະພານິຕິບັນຍັດຂອງອາຊຽນ.

ຕອນບ່າຍວັນດຽວກັນ, ທ່ານ ອາຄົມ ປຣະເສີດ ຮອງປະທານກຳມາທິການເສດຖະກິດ ແລະ ການເງິນ ໄດ້ນຳສະເໜີບົດລາຍງານແຫ່ງຊາດຂອງ ສປປ ລາວ ໃນການສືບຕໍ່ຈັດຕັ້ງປະຕິບັດບັນດາມະຕິທີ່ໄດ້ຮັບຮອງເອົາໃນກອງປະຊຸມໃຫຍ່ໄອປາ ຄັ້ງທີ46 ທີ່ຈັດຂຶ້ນຢູ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ ໃນເດືອນກັນຍາ2025ເຊິ່ງມະຕິເຫຼົ່ານີ້ ໄດ້ຖືກນຳໄປຈັດຕັ້ງປະຕິບັດໃນການສ້າງກົດໝາຍ, ນະໂຍບາຍ, ຍຸດທະສາດ ແລະ ໂຄງການຕ່າງໆຂອງຊາດ ຜ່ານການຮ່ວມມືຢ່າງໃກ້ຊິດລະຫວ່າງຝ່າຍນິຕິບັນຍັດ ແລະ ຝ່າຍບໍລິຫານ ໂດຍເນັ້ນໜັກໃສ່ການເພີ່ມທະວີຄວາມເປັນເຈົ້າການໃນການຕິດຕາມກວດກາຂອງລັດຖະສະພາ ເພື່ອເຮັດໃຫ້ກົດໝາຍມີຄວາມສອດຄ່ອງກັນ ແລະ ມີການຮ່ວມມືທີ່ເປັນຮູບປະທຳ ເຊິ່ງຈະຊ່ວຍສົ່ງເສີມບົດບາດຄວາມເປັນແກນກາງຂອງອາຊຽນ ທ່າມກາງສິ່ງທ້າທາຍລະດັບໂລກທີ່ຊັບຊ້ອນເຊັ່ນ: ຄວາມເຄັ່ງຮ້ອນທາງພູມສາດການເມືອງ, ການຫັນປ່ຽນທາງດ້ານດິຈິຕອນ, ການປ່ຽນແປງດິນຟ້າອາກາດ ແລະເສດຖະກິດ-ສັງຄົມ; ນອກຈາກນີ້, ທ່ານຍັງໄດ້ມີຄຳເຫັນໃນຫົວຂໍ້ທີ 1 ກ່ຽວກັບການສົ່ງເສີມການປົກຄອງ ເພື່ອສັນຕິພາບກວມລວມທຸກພາກສ່ວນເຊິ່ງສະພາແຫ່ງຊາດແຫ່ງສປປລາວສະໜັບສະໜູນບົດບາດສຳຄັນຂອງລັດຖະສະພາ ໃນການສົ່ງເສີມສັນຕິພາບ ແລະ ຄວາມໝັ້ນຄົງທີ່ເປັນພື້ນຖານທີ່ຈຳເປັນສຳລັບການພັດທະນາແບບຍືນຍົງ ແລະ ຄວາມຈະເລີນຮຸ່ງເຮືອງໃນພາກພື້ນ ພ້ອມທັງເຊື່ອໝັ້ນວ່າລັດຖະສະພາສາມາດເປັນຂົວຕໍ່ທີ່ສຳຄັນລະຫວ່າງລັດຖະບານ ແລະ ປະຊາຊົນ ໂດຍການສົ່ງເສີມວິທີການແບບຮອບດ້ານທີ່ເຄົາລົບອະທິປະໄຕຂອງຊາດ ແລະຄວາມຫຼາກຫຼາຍທາງດ້ານທັດສະນະ.

ນອກນີ້, ທ່ານນາງປານຄຳ ຂະຫຍອງເອກ ສະມາຊິກສະພາແຫ່ງຊາດປະຈຳການກຳມາທິການວັດທະນະທຳ-ສັງຄົມ ແລະ ຊົນເຜົ່າ ກໍໄດ້ມີຄຳເຫັນໃນຫົວຂໍ້ທີ 2 ກ່ຽວກັບການຕອບສະໜອງຂອງອາຊຽນຕໍ່ການປ່ຽນແປງດິນຟ້າອາກາດ ໂດຍຍົກໃຫ້ເຫັນບົດບາດທີ່ສຳຄັນຂອງລັດຖະສະພາ ເພື່ອຮັບປະກັນການຈັດຕັ້ງປະຕິບັດການຕິດຕາມກວດກາຢ່າງມີປະສິດທິພາບຂອງນະໂຍບາຍດ້ານດິນຟ້າອາກາດ ແລະ ໄດ້ຮັບຜົນປະໂຫຍດໃນທຸກຂະແໜງການຂອງສັງຄົມ ໂດຍສະເພາະຊຸມຊົນທີ່ມີຄວາມສ່ຽງ ເຊິ່ງ ສປປ ລາວ ມີເປົ້າໝາຍໃນການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວໃຫ້ເປັນສູນພາຍໃນປີ 2050 ເຊິ່ງສອດຄ່ອງກັບຂໍ້ຕົກລົງປາຣີ; ສປປລາວ ກຳລັງດຳເນີນມາດຕະການຫຼຸດຜ່ອນການປ່ອຍອາຍເຮືອນແກ້ວຜ່ານແຜນງານປະກອບສ່ວນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ໂດຍສຸມໃສ່ການພັດທະນາພະລັງງານໝູນວຽນ, ການເພີ່ມແຫຼ່ງດູດຊັບຄາບອນຈາກປ່າໄມ້, ການພັດທະນາລະບົບຂົນສົ່ງທີ່ຍືນຍົງ, ການບໍລິຫານຈັດການກະສິກຳຢ່າງມີປະສິດທິພາບ ເພື່ອກ້າວໄປສູ່ການພັດທະນາປະເທດແບບຍືນຍົງແລະເປັນມິດຕໍ່ສິ່ງແວດລ້ອມ.

ໃນຕອນທ້າຍກອງປະຊຸມ, ຄະນະຜູ້ແທນໄດ້ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 17 ແລະ ທ່ານ ໂພໄຊ ໄຂຄຳພິທູນ ກໍໄດ້ກ່າວຕອບຮັບການເປັນເຈົ້າພາບຈັດກອງປະຊຸມຄະນະປະສານງານໄອປາ ຄັ້ງທີ 18 ໃນປີ 2027 ທີ່ ສປປລາວ ຈະເປັນເຈົ້າພາບຢ່າງເປັນທາງການ.

**ຜູ້ຊີ້ນຳ**
ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

**ຄະນະບັນນາທິການ**
ທ່ານ ບໍ ຫານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ